ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-27 ມິຖຸນາ 2022
ປີທີ 11
ສະບັບທີ 854

## ສືບຕໍ່ພິຈາລະນາວຽກງານຂົງເຂດລັດຖະບານ ແລະ ຂອງສະພາແຫ່ງຊາດ

(ສພຊ) ໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໃນວັນທີ 22 ມິຖຸນາ 2022 ໂດຍການຜັດປ່ຽນກັນເປັນປະທານກອງປະຊຸມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມເປັນຄະນະປະທານ.





ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ສືບຕໍ່ປະກອບຄຳຄິດຕໍ່ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ແລະ ຮັບຟັງການຊີ້ແຈງເພີ່ມເຕີມຕໍ່ຄຳຊັກຖາມຂອງ ສສຊ ຈາກທ່ານຫົວໜ້າອົງການໄອຍະການປະຊາຊົນສູງສຸດ. ພ້ອມດ້ວຍທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ແລະ ລັດຖະມົນຕີກະຊວງຍຸຕິທຳ.

ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ ໄດ້ລາຍງານກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ; ຈາກນັ້ນ, ທ່ານ ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ ແລະ ບັນດາທ່ານ ສສຊ ກໍໄດ້ສຸມໃສ່ປະກອບຄຳຄິດຄຳເຫັນ ແລະ ຕັ້ງຄຳຖາມເຈາະຈີ້ມຕໍ່ລັດຖະບານ ເພື່ອໃຫ້ຄະນະລັດຖະບານໃຫ້ຄວາມກະຈ່າງແຈ້ງ ແລະ ຊີ້ແຈງເພີ່ມເຕີມ; ພ້ອມນັ້ນ, ທ່ານລັດຖະມົນຕີກະຊວງການເງິນ; ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ; ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ກໍໄດ້ໃຫ້ການຊີ້ແຈງຕໍ່ກອງປະຊຸມ.

ໂອກາດນີ້, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຕາງໜ້າໃຫ້ກອງເລຂານຸການກອງປະຊຸມ ຮັບຜິດຊອບວຽກງານຂົງເຂດແຜນການ, ການເງິນ ແລະ ການກວດສອບ ຂຶ້ນຜ່ານຮ່າງມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ.

ໃນລະຫວ່າງວັນທີ 23-24 ມິຖຸນາຜ່ານມາ, ພາຍໃຕ້ການເປັນປະທານກອງປະຊຸມຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມເປັນຄະນະປະທານ ໄດ້ພິຈາ

ອ່ານຕໍ່ໜ້າ 2

## ການສ້າງ ແລະ ປັບປຸງກົດໝາຍ ຂອງ ສປປລາວ



ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ ໄດ້ໃຫ້ສຳພາດກັບສື່ມວນຊົນ ກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ ເຊິ່ງທ່ານໄດ້ກ່າວວ່າ: ຂ້າພະເຈົ້າ ມີຄວາມພາກພູມໃຈ ແລະ ເປັນກຽດຢ່າງຍິ່ງ ທີ່ໄດ້ມາໃຫ້ສຳພາດກ່ຽວກັບວຽກງານການສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ ເຊິ່ງຈະໄດ້ຍົກໃຫ້ເຫັນໂດຍສັງເຂບກ່ຽວກັບຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ ແລະ ສະພາບການສ້າງ ແລະ ປັບປຸງກົດໝາຍ ໃນໄລຍະທີ່ຜ່ານມາ ແລະ ຕໍ່ໜ້າວຽກງານສ້າງ ແລະ ປັບປຸງກົດໝາຍ ເປັນນະໂຍບາຍຂອງພັກ ແລະ ວຽກສຳຄັນອັນໜຶ່ງ

ອ່ານຕໍ່ໜ້າ 2

## ຜົນການພິຈາລະນາວຽກງານຂອງລັດຖະບານ



ໃນຕອນເຊົ້າວັນທີ 21 ມິຖຸນາຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຖະແຫລງຂ່າວກ່ຽວກັບຜົນການພິຈາລະນາວຽກງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ແລະ ຄວາມຄືບໜ້າ ຂອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ສັງຄົມ ຕໍ່ບັນດາທ່ານ ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາ

ອ່ານຕໍ່ໜ້າ 7

## ຖະແຫລງຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ



ໃນວັນທີ 21 ມິຖຸນາ 2022 ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ໄດ້ຖະແຫລງກ່ຽວກັບຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປີ 2021-2023 ເຊິ່ງວຽກງານດັ່ງກ່າວ ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ຕາມມະຕິສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021.

ພາຍຫລັງກອງປະຊຸມໄດ້ຮັບຟັງການລາຍງານຂອງລັດຖະບານແລະການປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດແລ້ວ, ບັນດາສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ປະກອບຄຳເຫັນດ້ວຍຄວາມຮັບຜິດຊອບສູງຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ຕາມ 6 ແຜນວຽກຈຸດສຸມຂອງວາລະແຫ່ງຊາດດັ່ງກ່າວ ແຕ່ປີ 2021-

ອ່ານຕໍ່ໜ້າ 8

## ຄະນະຜູ້ແທນຂອງສະພາແຫ່ງຊາດລາວ ເຂົ້າຮ່ວມສັງເກດການເລືອກຕັ້ງ ຢູ່ຣາຊະອານາຈັກກຳປູເຈຍ




(ສພຊ) ໃນລະຫວ່າງວັນທີ 2-6 ມິຖຸນາຜ່ານມາ, ຄະນະຜູ້ສັງເກດການການເລືອກຕັ້ງຂອງສະພາແຫ່ງຊາດລາວ ນຳໂດຍທ່ານ ຄຳສິງ ໄຊສົມແພງ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຮ່ວມສັງເກດການການເລືອກຕັ້ງຂັ້ນຕາແສງ ຢູ່ຣາຊະອານາຈັກກຳປູເຈຍ.

ຄະນະຜູ້ສັງເກດການຂອງສະພາແຫ່ງຊາດລາວ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ສົມເດັດ ຮຸນເຊັນ ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກກຳປູເຈຍ; ເຂົ້າຢ້ຽມຂໍ່ານັບທ່ານ ສຸກຣອນ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ແລະ ຮ່ວມມືສາກົນ; ເຂົ້າພົບປະກັບທ່ານ ຢາລາ ຫົວໜ້າຄະນະພົວພັນຕ່າງປະເທດຂອງພັກປະຊາຊົນກຳປູເຈຍ ທັງເປັນປະທານກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດກຳປູເຈຍ, ເຂົ້າຮ່ວມກອງປະຊຸມພົບປະ ລະຫວ່າງຄະນະກຳມະການເລືອກຕັ້ງແຫ່ງຊາດກຳປູເຈຍ (NEC) ກັບບັນດາພັກການ

ອ່ານຕໍ່ໜ້າ 7


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

**ສືບຕໍ່ຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX**

## ສືບຕໍ່...

ລະນາບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຂົງເຂດເສດຖະກິດຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ ສະເໜີໂດຍທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ ແລະ ພິຈາລະນາບົດລາຍງານການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2-3 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 4 ແລະ ຜົນການຕິດຕາມກວດກາຂອງ ສພຊ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ແລະ ແຜນການຕິດຕາມກວດກາໃນຕໍ່ໜ້າ ທີ່ລາຍງານໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ.

ໂອກາດດັ່ງກ່າວ, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ ຕາງໜ້າຂອງຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບດັ່ງກ່າວ ຂອງຂົງເຂດເສດຖະກິດ; ພ້ອມນັ້ນ, ບັນດາທ່ານ ສສຊ ໄດ້ປະກອບຄຳເຫັນຕໍ່ການປະເມີນການຈັດຕັ້ງປະຕິບັດກົດໝາຍແຕ່ລະສະບັບ ແລະ ຍັງໄດ້ຮັບຟັງການຊີ້ແຈງເພີ່ມເຕີມຈາກທ່ານລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ລັດຖະມົນຕີກະຊວງການເງິນ; ຈາກນັ້ນ, ຕາງໜ້າກອງເລຂານຸການກອງປະຊຸມ ຮັບຜິດຊອບວຽກງານຂົງເຂດເສດຖະກິດ ໂດຍແມ່ນທ່ານ ພັອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ ໄດ້ຜ່ານຮ່າງ ມະຕິກອງປະຊຸມ ສພຊ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ແລະ ໃນວາລະຕອນທ້າຍຂອງການພິຈາລະນາວຽກງານຂົງເຂດລັດຖະບານ ຍັງໄດ້ຮັບຟັງການຊີ້ແຈງເພີ່ມເຕີມຈາກທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີຕື່ມອີກ.

ສຳລັບວຽກງານຂອງ ສພຊ, ບັນດາທ່ານ ສສຊ ກໍໄດ້ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມຕໍ່ບົດລາຍງານການເຄື່ອນໄຫວຂອງ ສພຊ ເພື່ອສາມາດເສີມຂະຫຍາຍດ້ານດີ, ຊອກຫາວິທີແກ້ໄຂຂໍ້ຄົງຄ້າງ ແລະ ຄົ້ນຄວ້າຫາວິທີທາງ, ກົນໄກຕ່າງໆເພື່ອເຮັດໃຫ້ວຽກງານຕິດຕາມກວດກາວຽກງານຕ່າງໆ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ມີຄວາມເຂັ້ມແຂງ, ໄປຕາມລະບຽບກົດໝາຍ ແລະ ເຮັດສຳເລັດຕາມລະດັບຄາດໝາຍ. ພ້ອມນັ້ນ, ຍັງໄດ້ຮັບຟັງການຊີ້ແຈງໃຫ້ຄວາມກະຈ່າງແຈ້ງກ່ຽວກັບວຽກງານຂອງ ສພຊ ຕໍ່ບັນດາທ່ານ ສສຊ ທີ່ຕັ້ງຂຶ້ນ; ຈາກນັ້ນ, ທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ໃນນາມຫົວໜ້າກອງເລຂາກອງປະຊຸມ ໄດ້ຂຶ້ນສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ 2 ສະບັບຕື່ມອີກ.

(ນາງ ປາກາລັກ ພົມມີໄຊ)

## ການສ້າງ...

ຂອງລັດ ເວົ້າລວມ ແລະ ຂອງສະພາແຫ່ງຊາດ; ຄືດັ່ງທີ່ພວກເຮົາໄດ້ຮູ້ແລ້ວວ່າ: ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດປະຕິບັດພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຂອງບັນດາອົງການລັດ.

ພາຍຫລັງປະເທດຊາດ ໄດ້ຮັບການສະຖາປະນາເປັນ ສປປລາວ ພັກເຮົາ ໄດ້ນຳພາປະຊາຊົນລາວບັນດາເຜົ່າປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດ ຮອດປີ 1986 ພັກໄດ້ວາງແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ, ມີຫລັກການ, ຫັນປ່ຽນຈາກການຄຸ້ມຄອງລວມສູນບໍລິຫານເກືອກູນ ໄປສູ່ການຄຸ້ມຄອງຕາມກົນໄກຕະຫລາດ ທີ່ມີການໄລ່ລຽງເສດຖະກິດ ແລະ ມີການດັດສົມຂອງລັດ ເພື່ອຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການຂອງການປ່ຽນແປງໃໝ່ດັ່ງກ່າວ ຈຶ່ງມີຄວາມຈຳເປັນຕ້ອງຫັນໄປສູ່ການຄຸ້ມຄອງລັດດ້ວຍລັດຖະທຳມະນູນ ແລະ ກົດໝາຍ. ດ້ວຍເຫດນັ້ນ, ກອງປະຊຸມເທື່ອທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1991 ຈຶ່ງໄດ້ພິຈາລະນາ, ຮັບຮອງເອົາລັດຖະທຳມະນູນສະບັບທຳອິດຂອງ ສປປລາວ ແລະ ໄດ້ປະກາດໃຊ້ໃນວັນທີ 15 ສິງຫາ 1991 ເຊິ່ງເປັນກົດໝາຍພື້ນຖານ ໃຫ້ແກ່ການສ້າງ ແລະ ປັບປຸງກົດໝາຍ ໃນແຕ່ລະໄລຍະ; ພ້ອມດຽວກັນນັ້ນ, ກໍໄດ້ປະກາດໃຊ້ກົດໝາຍຈຳນວນໜຶ່ງ ແລະ ຕໍ່ມາສະພາແຫ່ງຊາດ ແຕ່ຊຸດທີ III-IX ໄດ້ພິຈາລະນາຮັບຮອງເອົາກົດໝາຍຫລາຍກວ່າ 160 ສະບັບ ເຊິ່ງໄດ້ກາຍເປັນເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ທັງເປັນການເສີມຂະຫຍາຍ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໃຫ້ມີຄວາມສະເໝີພາບຕໍ່ໜ້າກົດໝາຍ. ເວົ້າລວມ ກົດໝາຍຂອງລັດເຮົາສະແດງເຖິງເຈດຈຳນົງຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ ເພື່ອດັດປັບສາຍພົວພັນສັງຄົມ ຫລື ເວົ້າສະເພາະ ກົດໝາຍ ແມ່ນນິຕິກຳທີ່ສ້າງຂຶ້ນໂດຍອົງການທີ່ມີສິດອຳນາດ, ຮັບຮອງເອົາໂດຍສະພາແຫ່ງຊາດ ແລະ ປະກາດໃຊ້ໂດຍປະທານປະເທດ ທີ່ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ແນໃສ່ດັດປັບສາຍພົວພັນສັງຄົມ ມີຜົນບັງຄັບທົ່ວໄປ ທີ່ປົກປ້ອງລະບອບການເມືອງປະຊາທິປະໄຕປະຊາຊົນ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ.

**1. ຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ**

ການສ້າງ ຫລື ປັບປຸງກົດໝາຍ ແມ່ນປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ ປີ 2021) ຄື:

1). ສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ເຊິ່ງການຈັດຕັ້ງທີ່ມີສິດສະເໜີສ້າງກົດໝາຍ ຕ້ອງສ້າງແຜນການສ້າງ ແລະ ປັບປຸງກົດໝາຍຂອງຕົນ ໂດຍກຳນົດແຈ້ງນະໂຍບາຍໃນການສ້າງກົດໝາຍເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

2). ສ້າງຮ່າງກົດໝາຍ ຂອງກະຊວງ, ອົງການ: ຕ້ອງໄດ້ແຕ່ງຕັ້ງຄະນະຮັບຜິດຊອບສ້າງຮ່າງກົດໝາຍ, ເກັບກຳ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນກ່ຽວກັບນະໂຍບາຍໃໝ່ຖ້າມີ, ຂຽນເນື້ອໃນຂອງຮ່າງກົດໝາຍ, ລົງທາບທາມຄຳເຫັນຢູ່ສູນກາງ ແລະ ທ້ອງຖິ່ນ, ສ້າງບົດສະເໜີຮ່າງກົດໝາຍ ແລ້ວສະເໜີຕໍ່ກະຊວງຍຸຕິທຳ ເພື່ອກວດກາຄວາມສອດຄ່ອງຂອງຮ່າງກົດໝາຍ;

3). ກວດກາຄວາມສອດຄ່ອງຂອງຮ່າງກົດໝາຍ ໂດຍກະຊວງຍຸຕິທຳ: ຕ້ອງເຮັດຢ່າງລະອຽດຮອບດ້ານໂດຍເນັ້ນໃສ່ຄວາມສອດຄ່ອງຂອງຮ່າງກົດໝາຍກັບນະໂຍບາຍໃນການສະເໜີສ້າງກົດໝາຍ, ລັດຖະທຳມະນູນ, ກົດໝາຍອື່ນ, ສົນທິສັນຍາທີ່ ສປປລາວ ເປັນພາຄີ, ຄວາມສະເໝີພາບຍິງ-ຊາຍ, ຄວາມຈຳເປັນ, ຄວາມສົມເຫດສົມຜົນຂອງຂັ້ນຕອນທາງດ້ານບໍລິຫານ ແລະ ເຕັກນິກການສ້າງນິຕິກຳ ພາຍໃນເວລາສິບຫ້າວັນ ນັບແຕ່ວັນໄດ້ຮັບຮ່າງກົດໝາຍເປັນຕົ້ນໄປ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ;

4). ພິຈາລະນາຮ່າງກົດໝາຍ ໂດຍລັດຖະບານ ແມ່ນພາຍຫລັງໄດ້ຮັບຮ່າງກົດໝາຍ ແລ້ວຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຕ້ອງຄົ້ນຄວ້າກ່ຽວກັບນະໂຍບາຍ, ບັນຫາທີ່ບໍ່ທັນເປັນເອກະພາບ, ບັນຫາຂໍການຊີ້ນຳ ແລະ ຈັດເຂົ້າວາລະຂອງກອງປະຊຸມລັດຖະບານ ເພື່ອພິຈາລະນາ. ພາຍຫລັງຮ່າງກົດໝາຍໄດ້ຜ່ານການພິຈາລະນາໃນກອງປະຊຸມລັດຖະບານແລ້ວ ຖ້າຫາກມີການຕົກລົງ ແລະ ຊີ້ນຳໃຫ້ປັບປຸງຮ່າງກົດໝາຍນັ້ນ ກໍໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີຮັບຜິດຊອບປະສານສົມທົບກັບອົງການທີ່ຮັບຜິດຊອບສ້າງຮ່າງກົດໝາຍ, ກະຊວງຍຸຕິທຳ, ກຳມາທິການກົດໝາຍ ແລະ ກຳມາທິການທີ່ກ່ຽວຂ້ອງ ຂອງສະພາແຫ່ງຊາດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຮີບຮ້ອນປັບປຸງແລ້ວສົ່ງໃຫ້ລັດຖະບານ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ;

5). ພິຈາລະນາ ແລະ ຮັບຮອງເອົາຮ່າງກົດໝາຍ ໂດຍສະພາແຫ່ງຊາດ:

- ການພິຈາລະນາແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ແມ່ນພາຍຫລັງໄດ້ຮັບແຜນການສ້າງ ແລະ ປັບປຸງກົດໝາຍ ທີ່ມີສິດສະເໜີສ້າງກົດໝາຍແລ້ວ ຄະນະປະຈຳສະພາແຫ່ງຊາດ ມອບໃຫ້ກຳມາທິການກົດໝາຍປະສານສົມທົບກັບກຳມາທິການອື່ນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ກວດກາລະອຽດແລ້ວລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ສະເໜີແຜນການສ້າງ ແລະ ປັບປຸງກົດໝາຍຫ້າປີ ຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດແຕ່ລະຊຸດ ພິຈາລະນາຮັບຮອງເອົາ; ສຳລັບແຜນການສ້າງ ແລະ ປັບປຸງກົດໝາຍປະຈຳປີ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງ ໂດຍອີງຕາມແຜນການສ້າງ ແລະ ປັບປຸງກົດໝາຍ ຫ້າປີ ທີ່ໄດ້ຮັບຮອງເອົາແລ້ວ ແລະ ຕາມການສະເໜີຂອງການຈັດຕັ້ງທີ່ມີສິດສະເໜີສ້າງກົດໝາຍ; ແຈ້ງແຜນການສ້າງ ແລະ ປັບປຸງກົດໝາຍ ຫ້າປີ ແລະ ປະຈຳປີ ທີ່ໄດ້ຮັບຮອງເອົາແລ້ວນັ້ນໃຫ້ການຈັດຕັ້ງທີ່ມີສິດສະເໜີສ້າງກົດໝາຍ ເປັນຜູ້ຈັດຕັ້ງປະຕິບັດ;

- ການກວດກາເນື້ອໃນຮ່າງກົດໝາຍຮອບດ້ານ ແມ່ນພາຍຫລັງໄດ້ຮັບຮ່າງກົດໝາຍ ຈາກການຈັດຕັ້ງທີ່ມີສິດສະ ເໜີສ້າງກົດໝາຍແລ້ວຄະນະປະຈຳສະພາແຫ່ງຊາດ ມອບໃຫ້ກຳມາທິການກົດໝາຍ ແລະ ກຳມາທິການອື່ນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເພື່ອກວດກາເນື້ອໃນຮ່າງກົດໝາຍຮອບດ້ານ ໂດຍສະເພາະ ກວດກາຄວາມຈຳເປັນ, ຈຸດປະສົງ, ຄາດໝາຍ ແລະ ຂອບເຂດຂອງຮ່າງກົດໝາຍ, ຄວາມສອດຄ່ອງກັບແນວທາງນະໂຍບາຍລັດຖະທຳມະນູນ, ກົດໝາຍອື່ນ ແລະ ສົນທິສັນຍາທີ່ ສປປລາວ ເປັນພາຄີ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວແລ້ວ ລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ;

- ການຈັດກອງປະຊຸມສຳມະນາກົດໝາຍເປີດກວ້າງ ແມ່ນຄະນະປະຈຳສະພາແຫ່ງຊາດ ຕົກລົງຈັດກອງປະຊຸມສຳມະນາເປີດກວ້າງ ສຳລັບສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເພື່ອປະກອບຄຳເຫັນໃສ່ຮ່າງກົດໝາຍ. ໃນກໍລະນີເຫັນວ່າຮ່າງກົດໝາຍຫາກພົວພັນກັບຫລາຍຂົງເຂດວຽກງານ ຫລື ຕິດພັນໂດຍກົງກັບສິດ ແລະ ຜົນປະໂຫຍດລວມຂອງປະຊາຊົນ ຄະນະປະຈຳສະພາແຫ່ງຊາດ ຕົກລົງເອົາຮ່າງກົດໝາຍໄປປຶກສາຫາລືກັບປະຊາຊົນ ແລ້ວການລວບລວມຄຳເຫັນຂອງປະຊາຊົນ ເພື່ອປັບປຸງເນື້ອໃນຮ່າງກົດໝາຍ ກ່ອນຈະສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ;

- ການພິຈາລະນາຮ່າງກົດໝາຍຢູ່ກອງປະຊຸມສະພາແຫ່ງຊາດ ແມ່ນສະພາແຫ່ງຊາດ ນຳເອົາຮ່າງກົດໝາຍມາພິຈາລະນາ ຢູ່ກອງປະຊຸມເທື່ອດຽວ ຫລື ສອງເທື່ອ ໃນການພິຈາລະນາຮັບຮອງເອົາຮ່າງກົດໝາຍ ໃນກອງປະຊຸມສະພາແຫ່ງຊາດ ດຳເນີນໄປດ້ວຍການລົງຄະແນນສຽງແບບປິດລັບ ຫລື ເປີດເຜີຍ; ກົດໝາຍຈະຖືວ່າຖືກຮັບຮອງເອົາກໍຕໍ່ເມື່ອໄດ້ຮັບຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ; ຄະນະປະຈຳສະພາແຫ່ງຊາດ ສະເໜີກົດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວຕໍ່ປະທານປະເທດພາຍໃນເວລາຊາວວັນ ນັບແຕ່ວັນກອງປະຊຸມສະພາແຫ່ງຊາດ ໄດ້ຮັບຮອງເອົາເປັນຕົ້ນໄປ ເພື່ອພິຈາລະນາປະກາດໃຊ້;

6). ການປະກາດໃຊ້ກົດໝາຍໂດຍປະທານປະເທດ: ປະທານປະເທດ ພິຈາລະນາອອກລັດຖະດຳລັດປະກາດໃຊ້ກົດໝາຍຢ່າງຊ້າສິບວັນນັບແຕ່ວັນໄດ້ຮັບກົດໝາຍຈາກສະພາແຫ່ງຊາດເປັນຕົ້ນໄປ. ໃນໄລຍະເວລາດັ່ງກ່າວປະທານປະເທດມີສິດສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດພິຈາລະນາຄືນໃໝ່, ຖ້າສະພາແຫ່ງຊາດຫາກຕົກລົງຢັ້ງຢືນເອົາຕາມເດີມແລ້ວປະທານປະເທດຕ້ອງໄດ້ປະກາດໃຊ້ພາຍໃນເວລາສິບຫ້າວັນນັບແຕ່ວັນໄດ້ຮັບໜັງສືຢັ້ງຢືນຈາກຄະນະປະຈຳສະພາແຫ່ງຊາດ.

**2. ສັງເກດຕີລາຄາ ດ້ານດີ, ດ້ານອ່ອນ, ສາເຫດ ແລະ ບົດຮຽນການສ້າງ ແລະ ປັບປຸງກົດໝາຍ**

ກ. ດ້ານດີ ແລະ ສາເຫດທີ່ພາໃຫ້ມີດ້ານດີ: ຜ່ານການຈັດຕັ້ງປະຕິບັດວຽກງານສ້າງ ແລະ ປັບປຸງກົດໝາຍ ໃນໄລຍະຜ່ານມາ ກໍມີຜົນສຳເລັດ ແລະ ດ້ານດີ ຢ່າງຫລວງຫລາຍ ແຕ່ຈະຍົກໃຫ້ເຫັນບາງດ້ານທີ່ພົ້ນເດັ່ນ ຄື:

- ຫລາຍກະຊວງ, ອົງການທີ່ກ່ຽວຂ້ອງ ໄດ້ເອົາໃຈໃສ່ເປັນເຈົ້າການຈັດຕັ້ງປະຕິບັດຕາມແຜນການສ້າງ ແລະ ປັບປຸງກົດໝາຍ ທີ່ສະພາແຫ່ງຊາດຮັບຮອງ;

- ກຳມາທິການກົດໝາຍ ໄດ້ເປັນເຈົ້າການປະສານສົມທົບກັບກຳມາທິການກ່ຽວຂ້ອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອກວດກາເນື້ອໃນຮອບດ້ານ ໂດຍມີການຄົ້ນຄວ້າ, ວິໄຈເນື້ອໃນແຕ່ລະມາດຕາຂອງຮ່າງກົດໝາຍ ຢ່າງລະອຽດ, ຮອບດ້ານ;

- ຄະນະປະຈຳສະພາແຫ່ງຊາດ ມີການຊີ້ນຳທາງດ້ານແນວທາງນະໂຍບາຍຕໍ່ແຕ່ລະຮ່າງກົດໝາຍ ແລະ ມີຄວາມຮັບຜິດຊອບສູງໃນການຊີ້ນຳ ແລະ ສະມາຊິກສະພາແຫ່ງຊາດ ໄດ້ເປັນເຈົ້າການເສີມຂະຫຍາຍສິດປະຊາທິປະໄຕ ຢ່າງກວ້າງຂວາງໃນການຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ເນື້ອໃນຂອງບັນດາຮ່າງກົດໝາຍ;

- ມີການປະສານສົມທົບຢ່າງກົມກຽວກັນລະຫວ່າງສະພາແຫ່ງຊາດ ກັບພາກສ່ວນກ່ຽວຂ້ອງ ໃນການສ້າງ ແລະ ປັບປຸງກົດໝາຍ ໃຫ້ມີຄວາມຈະແຈ້ງ, ຄົບຖ້ວນ, ຮັດກຸມ, ສອດຄ່ອງກັບແນວທາງນະໂຍບາຍ, ສະພາບການຕົວຈິງທາງດ້ານເສດຖະກິດ-ສັງຄົມຂອງຊາດ ແລະ ສາມາດປະຕິບັດໄດ້.

ຂ. ດ້ານອ່ອນ ແລະ ສາເຫດທີ່ພາໃຫ້ມີດ້ານອ່ອນ: ໄປຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດນັ້ນ ກໍຍັງມີຫລາຍຂໍ້ຄົງຄ້າງ ທີ່ເປັນດ້ານອ່ອນ ແລະ ບໍ່ສາມາດປະຕິບັດໄດ້ ເຊິ່ງສະແດງອອກໃນຈຸດທີ່ພົ້ນເດັ່ນ ດັ່ງນີ້:

- ການປະເມີນຜົນກະທົບຂອງຮ່າງກົດໝາຍ ກ່ອນການສ້າງ ແລະ ປັບປຸງ ຍັງບໍ່ທັນເຮັດໄດ້ດີ ແລະ ຖືກຕ້ອງຕາມນິຕິກຳທີ່ກ່ຽວຂ້ອງໄດ້ກຳນົດໄວ້;

- ການສ້າງ ແລະ ປັບປຸງກົດໝາຍຂອງບາງກະຊວງ, ອົງການ ຍັງມີລັກສະນະຮີບດ່ວນ, ຟ້າວຟັ່ງ, ແລ່ນນຳງົບປະມານການຊ່ວຍເຫລືອຂອງສາກົນ, ການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍ ຍັງບໍ່ທັນເລິກເຊິ່ງ ແລະ ງົບປະມານ ເພື່ອຮັບໃຊ້ການສ້າງ ແລະ ປັບປຸງກົດໝາຍ ຍັງມີຈຳກັດ;

- ການເອົາຮ່າງກົດໝາຍລົງທາບທາມຄຳເຫັນ ຢູ່ສູນກາງ ແລະ ທ້ອງຖິ່ນ ໃຊ້ເວລາຈຳກັດ, ບໍ່ກວ້າງຂວາງ, ທົ່ວເຖິງ ແລະ ຜູ້ເຂົ້າຮ່ວມໃນການທາບທາມ ຍັງບໍ່ເປັນເຈົ້າການໃນການປະກອບຄຳເຫັນຕໍ່ເນື້ອໃນກົດໝາຍ.

ຄ. ບົດຮຽນທີ່ຖອດຖອນໄດ້: ຜ່ານການຈັດຕັ້ງປະຕິບັດວຽກງານສ້າງ ແລະ ປັບປຸງກົດໝາຍ ໃນໄລຍະຜ່ານມາ ສາມາດຖອດຖອນບົດຮຽນທີ່ພົ້ນເດັ່ນໄດ້ ດັ່ງນີ້:

- ຍົກສູງຄວາມຮັບຜິດຊອບຂອງຄະນະສ້າງ ແລະ ປັບປຸງກົດໝາຍ ໃນການຄົ້ນຄວ້າ, ວິເຄາະ, ວິໄຈ ບົດຮຽນຂອງຕ່າງປະເທດ ແລະ ພຶດຕິກຳຕົວຈິງທີ່ກ່ຽວຂ້ອງກັບເນື້ອໃນຂອງຮ່າງກົດໝາຍ ແລະ ຕ້ອງກຳນົດແຜນການ, ແຜນງານ, ແຜນງົບປະມານ ເພື່ອຮັບໃຊ້ສ້າງ ແລະ ປັບປຸງກົດໝາຍ ແລະ ຕ້ອງມີການທາບທາມຄຳເຫັນຢູ່ສູນກາງ ແລະ ທ້ອງຖິ່ນ ຢ່າງກວ້າງຂວາງ;

- ສະພາແຫ່ງຊາດ ຕ້ອງເປີດກວ້າງຮັບຟັງຄຳຄິດຄຳເຫັນທາງດ້ານວິຊາການ ຕໍ່ຮ່າງກົດໝາຍ ແນໃສ່ເຮັດໃຫ້ເນື້ອໃນຮ່າງກົດໝາຍ ມີຄວາມຄົບຖ້ວນ, ສອດຄ່ອງ ແລະ ຮັດກຸມ; ພະນັກງານ-ລັດຖະກອນຂອງກຳມາທິການກົດໝາຍ ແລະ ກຳມາທິການອື່ນຂອງສະພາແຫ່ງຊາດ ທີ່ຖືກແຕ່ງຕັ້ງໃຫ້ເຂົ້າຮ່ວມໃນຄະນະສ້າງ ແລະ ປັບປຸງກົດໝາຍ ຕ້ອງເປັນເຈົ້າການສະໜອງຂໍ້ມູນດ້ານຕ່າງໆຢ່າງລະອຽດ.

3. ບາງບັນຫາທີ່ຄວນເອົາໃຈໃສ່ປັບປຸງການສ້າງ ແລະ ປັບປຸງກົດໝາຍໃຫ້ມີຄຸນນະພາບ

1). ເພີ່ມທະວີການຊີ້ນຳຂອງຄະນະພັກສະພາແຫ່ງຊາດ ຕໍ່ການສ້າງ ແລະ ປັບປຸງກົດໝາຍ ໂດຍຖືເອົາຄຸນນະພາບເປັນກົກ, ເອົາປະລິມານເປັນສຳຄັນ;

2). ຕ້ອງຈັດສັນງົບປະມານ, ກຳນົດບຸກຄະລາກອນເຂົ້າໃນວຽກງານສ້າງ, ປັບປຸງກົດໝາຍໃຫ້ພຽງພໍ ແລະ ຈັດຕັ້ງການເຝິກອົບຮົມ, ເຜີຍແຜ່ກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ແລະ ກະຊວງ, ອົງການທີ່ກ່ຽວຂ້ອງ ຕ້ອງເອົາໃຈໃສ່ໃນການສ້າງ ແລະ ປັບປຸງກົດໝາຍ ໃຫ້ມີຄວາມພ້ອມໃນທຸກດ້ານ ແລະ ປະເມີນຜົນກະທົບຂອງນະໂຍບາຍການສ້າງ ແລະ ປັບປຸງກົດໝາຍ ກ່ອນນຳສະເໜີລາຍຊື່ກົດໝາຍເຂົ້າໃນແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີຂອງສະພາແຫ່ງຊາດ;

3). ເພີ່ມທະວີການປະສານສົມທົບລະຫວ່າງສະພາແຫ່ງຊາດ ກັບລັດຖະບານ, ອົງການທີ່ກ່ຽວຂ້ອງ ໃນການກຳນົດຈຳນວນກົດໝາຍ ທີ່ຈະສ້າງ ຫລື ປັບປຸງ ໃຫ້ລະອຽດ ແລະ ຊັດເຈນ;

4). ການກວດກາຄວາມສອດຄ່ອງທາງດ້ານກົດໝາຍ ຕ້ອງໃຫ້ຄວາມສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍອື່ນທີ່ກ່ຽວຂ້ອງ, ສົນທິສັນຍາທີ່ ສປປລາວ ເປັນພາຄີ;

5). ມີການປັບປຸງກົນໄກການປະສານສົມທົບລະຫວ່າງກຳມາທິການພາຍໃນສະພາແຫ່ງຊາດ ແລະ ພາກສ່ວນທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ໃຫ້ມີຄວາມກົມກຽວກັນ.

# 6 ເດືອນຕົ້ນປີ 2022 GDP ຂະຫຍາຍຕົວ 4,3%

ອ່ານຕໍ່ສະບັບກ່ອນ...

7) ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຂອງພັກໄດ້ສືບຕໍ່ເພີ່ມທະວີ ໂດຍສົມທົບກັບວຽກງານກໍ່ສ້າງຮາກຖານການເມືອງ ຢູ່ເຂດຈຸດສຸມຕ່າງໆ ອັນໄດ້ເຮັດໃຫ້ປະເທດຊາດ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍທີ່ໜັກແໜ້ນ.

ສັງລວມແລ້ວ, ໃນໄລຍະ 6 ເດືອນຕົ້ນປີ 2022 ເຖິງວ່າສະພາບການພາກພື້ນ ແລະ ສາກົນ ມີການຜັນແປຢ່າງສັບສົນ, ສະພາບພາຍໃນປະເທດສືບຕໍ່ມີຄວາມຫຍຸ້ງຍາກຫລາຍດ້ານກໍຕາມ, ແຕ່ພາຍໃຕ້ການນໍາພາ-ຊີ້ນໍາ ຂອງກົມການເມືອງ, ຄະນະເລຂາທິການສູນການພັກ, ການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຢ່າງໃກ້ຊິດ ສົມທົບກັບການບໍລິຫານໂດຍກົງຂອງລັດຖະບານ ກໍຄືອົງການປົກຄອງທ້ອງຖິ່ນ, ມີການປະກອບສ່ວນຢ່າງເປັນເຈົ້າການຂອງພະນັກງານ, ນັກຮົບ ແລະ ປະຊາຊົນບັນດາເຜົ່າທຸກຊັ້ນຄົນຈໍານວນສ່ວນຫລາຍ; ເພື່ອນມິດສາກົນ ແລະ ເພື່ອນມິດຍຸດທະສາດໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອແກ່ປະເທດພວກເຮົາດ້ວຍຫລາຍຮູບ, ຫລາຍວິທີການ, ຈຶ່ງເຮັດໃຫ້ປະເທດເຮົາ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ເສດຖະກິດຂອງປະເທດສືບຕໍ່ຂະຫຍາຍຕົວໃນຈັງຫວະດີ ແລະ ສາມາດປະຄັບປະຄອງໄດ້. ເຖິງແນວໃດກໍຕາມ ກໍຍັງມີຂໍ້ຄົງຄ້າງທີ່ພວກເຮົາຕ້ອງພ້ອມກັນບຸກທະລຸແກ້ໄຂປັບປຸງຢ່າງແຂງແຮງຕື່ມ.

**ຂໍ້ຄົງຄ້າງ ແລະ ສາເຫດ**

\+ ຂໍ້ຄົງຄ້າງ.

1) ການເຜີຍແຜ່ເຊື່ອມຊຶມແນວທາງ, ມະຕິ, ກົດໝາຍ ແລະ ນິຕິກໍາຕ່າງໆ ກໍຄືແຜນແຕ່ລະດ້ານຂອງບາງພາກສ່ວນ, ບາງຂັ້ນຍັງບໍ່ທັນທົ່ວເຖິງ, ການຈັດຕັ້ງປະຕິບັດຕົວຈິງມີຄວາມຊັກຊ້າ.

2) ຕົວເລກເສດຖະກິດມະຫາພາກມີຄວາມບອບບາງ; ການຜະລິດກະສິກໍາ-ປ່າໄມ້, ການປຸງແຕ່ງ ແລະ ການບໍລິການ ເຖິງວ່າໄດ້ມີຄວາມພະຍາຍາມ ແຕ່ທຽບໃສ່ຄວາມຮຽກຮ້ອງຕ້ອງການແມ່ນຍັງອ່ອນນ້ອຍຫລາຍ. ການສ້າງໂຄງລ່າງພື້ນຖານ-ວັດຖຸເຕັກນິກ ລວມທັງການບໍລິການເພື່ອຮອງຮັບໃຫ້ແກ່ການທ່ອງທ່ຽວ ຍັງບໍ່ທັນຮັບປະກັນຄຸນນະພາບ ເຊິ່ງຍັງບໍ່ທັນຈູງໃຈນັກທ່ອງທ່ຽວຕ່າງປະເທດ ເທົ່າທີ່ຄວນ.

3) ເຖິງວ່າໄດ້ອອກນິຕິກໍາຫລາຍສະບັບ, ແຕ່ການຈັດຕັ້ງປະຕິບັດຕົວຈິງຍັງບໍ່ທັນໄດ້ດີເທົ່າທີ່ຄວນ ລວມທັງການຄຸ້ມຄອງເຂດເສດຖະກິດພິເສດ, ການປະຕິບັດວິໄນແຜນການ-ການເງິນຂອງບາງຂະແໜງການ ແລະ ທ້ອງຖິ່ນລວມທັງຜູ້ປະກອບການຈໍານວນໜຶ່ງ ຍັງບໍ່ທັນເຂັ້ມງວດ, ການເກັບລາຍຮັບຍັງມີການຮົ່ວໄຫລ, ການແກ້ໄຂໜີ້ສິນຍັງຄືບໜ້າຊ້າ.

4) ການຄຸ້ມຄອງ ແລະ ພັດທະນາແຮງງານ ໂດຍລວມແລ້ວ ຍັງບໍ່ທັນໄດ້ຮັບການປະຕິບັດຕາມກົດໝາຍ ກໍຄືແຜນການກໍານົດໄວ້ ເຊິ່ງເຮັດໃຫ້ມີການວ່າງງານຢູ່ບາງບໍລິເວນເຂດແຄ້ວນ. ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີ ຍັງບໍ່ໄດ້ຕາມຄາດໝາຍກໍານົດ.

\+ ສາເຫດທີ່ພາໃຫ້ມີຈຸດອ່ອນ, ຂໍ້ຄົງຄ້າງ:

1) ຄວາມຮັບຮູ້ ແລະ ເຂົ້າໃຈຂອງພະນັກງານຢູ່ຂະແໜງການ ແລະ ທ້ອງຖິ່ນ, ຕະຫລອດຮອດປະຊາຊົນບັນດາເຜົ່າຈໍານວນໜຶ່ງ ຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມ ຍັງບໍ່ທັນເລິກເຊິ່ງ.

2) ສະຕິຄວາມເປັນເຈົ້າການ, ຄວາມຮັບຜິດຊອບ ລວມທັງຄວາມສະດຸ້ງໄວຕໍ່ບັນຫາຕ່າງໆທີ່ຈະເກີດຂຶ້ນຈາກພາຍນອກ ຂອງບາງພາກສ່ວນຍັງບໍ່ທັນສູງເທົ່າທີ່ຄວນ ຈຶ່ງເຮັດໃຫ້ການແກ້ໄຂບັນຫາຕ່າງໆບໍ່ທັນການ.

3) ຄວາມຕ້ອງການພັດທະນາມີສູງ, ແຕ່ຄວາມອາດສາມາດທາງດ້ານງົບປະມານມີຈໍາກັດ ແລະ ບໍ່ພຽງພໍກັບຄວາມຕ້ອງການຕົວຈິງ; ການຄຸ້ມຄອງ ແລະ ນໍາໃຊ້ທຶນຮອນຂອງບາງພາກສ່ວນ ຍັງບໍ່ທັນຖືກຕ້ອງຕາມລະບຽບການທີ່ໄດ້ກໍານົດໄວ້. ບັນຫາຕ່າງໆໃນຂົງເຂດການລົງທຶນ, ການເຊົ່າສໍາປະທານ ລວມທັງໜີ້ສາທາລະນະສະສົມມາຫລາຍປີ ແລະ ມີຈໍານວນຫລາຍສົມຄວນ.

4) ການປັບປຸງກົນໄກ ແລະ ສະພາບແວດລ້ອມເພື່ອດຶງດູດການລົງທຶນຍັງມີຄວາມຊັກຊ້າ, ການປະສານງານກັນລະຫວ່າງຂະແໜງການຂອງບາງພາກສ່ວນຍັງບໍ່ທັນໂລ່ງລ່ຽນ; ຂາດລະບົບຕິດຕາມ, ກວດກາແຜນພັດທະນາເສດຖະກິດ-ສັງຄົມ ທີ່ມີປະສິດທິພາບ. ພ້ອມກັນນັ້ນ, ຂໍ້ມູນສໍາລັບຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ ບາງດ້ານຍັງບໍ່ທັນຊັດເຈນ.

5) ການຈັດຕັ້ງປະຕິບັດແຜນແມ່ນຢູ່ໃນສະພາບການລະບາດ ຂອງພະຍາດໂຄວິດ-19 ເຮັດໃຫ້ການລົງທຶນ, ການຜະລິດ, ການປຸງແຕ່ງ ແລະ ການບໍລິການຕ່າງໆ ລວມທັງການສົ່ງອອກສິນຄ້າໄປບາງປະເທດໃກ້ຄຽງ ໃນບາງໄລຍະພົບຄວາມຫຍຸ້ງຍາກ; ທ່າອ່ຽງອັດຕາເງິນເຟີ້ຕິດພັນກັບລາຄານໍ້າມັນ ໃນຕະຫລາດໂລກນັບມື້ສູງຂຶ້ນ, ຄວາມຂັດແຍ່ງເສດຖະກິດ, ການເມືອງ ລະຫວ່າງບາງປະເທດໃນໂລກ ໄດ້ສົ່ງຜົນກະທົບບໍ່ໜ້ອຍຕໍ່ການ

ອ່ານຕໍ່ສະບັບໜ້າ...

# ກະຊວງການເງິນ ສາມາດເກັບລາຍຮັບໄດ້ 10.633,81 ຕື້ກີບ

ອ່ານຕໍ່ສະບັບກ່ອນ...

(1) ໜີ້ສິນພາຍໃນ: ຊໍາລະແລ້ວ 1,619 ຕື້ກີບ ເທົ່າກັບ 24,53% ຂອງແຜນການປີ, ໃນນີ້:

- ຕົ້ນທຶນພັນທະບັດ ຊໍາລະແລ້ວ 1.381 ຕື້ກີບ ເທົ່າກັບ 27,08% ຂອງແຜນການປີ;
- ດອກເບ້ຍພັນທະບັດ ຊໍາລະແລ້ວ 238 ຕື້ກີບ ເທົ່າກັບ 15,88% ຂອງແຜນການປີ.

ສໍາລັບການຈັດຕັ້ງປະຕິບັດແກ້ໄຂໜີ້ສິນໂຄງການລົງທຶນຂອງລັດດ້ວຍການອອກພັນທະບັດລັດຖະບານ ວົງເງິນ 10 ພັນຕື້ກີບ ສາມາດຈັດຕັ້ງປະຕິບັດໄດ້ 9,577 ຕື້ກີບ ເທົ່າກັບ 95,78% ຂອງແຜນການ, ໃນນັ້ນ ພັນທະບັດອວ່າຍໜີ້ສາມແຈ ປະຕິບັດໄດ້ 3.818 ຕື້ກີບ ເທົ່າກັບ 93,55% ຂອງແຜນການ ແລະ ພັນທະບັດຊໍາລະໜີ້ສິນໂຄງການລົງທຶນຂອງລັດ ປະຕິບັດໄດ້ 5.759 ຕື້ກີບ ເທົ່າກັບ 97,32% ຂອງແຜນການ, ຍັງມີຍອດເຫລືອ 423 ຕື້ກີບ, ໃນນັ້ນ; ພັນທະບັດອວ່າຍໜີ້ສາມແຈ 264 ຕື້ກີບ ແລະ ພັນທະບັດຊໍາລະໜີ້ສິນໂຄງການລົງທຶນຂອງລັດ 159 ຕື້ກີບ,

(2) ໜີ້ສິນຕ່າງປະເທດ: ຊໍາລະແລ້ວ 137,90 ລ້ານໂດລາເທົ່າກັບ 8,62% ຂອງແຜນການປີ, ໃນນີ້:

- ຕົ້ນທຶນເງິນກູ້ຊໍາລະແລ້ວ 81,72 ລ້ານໂດລາ ເທົ່າກັບ 6,92% ຂອງແຜນການປີ;
- ດອກເບ້ຍເງິນກູ້ຊໍາລະແລ້ວ 56,17 ລ້ານໂດລາ ເທົ່າກັບ 13,46% ຂອງແຜນການປີ.

ລັດຖະບານ ກໍຄື ກະຊວງການເງິນ ຈະພະຍາຍາມບໍລິຫານໜີ້ສິນສາທາລະນະ, ໂດຍສະເພາະແຜນການຊໍາລະໜີ້ສິນພາຍໃນ ແລະ ຕ່າງປະເທດ ໃນ 7 ເດືອນທ້າຍປີ 2022 ຮັບປະກັນໃຫ້ໄດ້ຕາມແຜນ ແລະ ຈະປະຄັບປະຄອງການແກ້ໄຂໜີ້ສິນສາທາລະນະ ໃຫ້ຮັບປະກັນປະຕິບັດໄດ້ໂດຍພື້ນຖານ ເດັດຂາດບໍ່ໃຫ້ປະເທດຕົກເປັນປະເທດບໍ່ສາມາດຊໍາລະໜີ້ສິນໄດ້.

6) ຜົນສໍາເລັດການນໍາໃຊ້ເຄື່ອງມືທັນສະໄໝໃນການຄຸ້ມຄອງເກັບລາຍຮັບ

(1) ໄດ້ນໍາໃຊ້ລະບົບແຈ້ງພາສີແບບເອເລັກໂຕຣນິກASYCUDA ຢູ່ 26 ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ, 6 ຈຸດ ຢູ່ເຂດເສດຖະກິດພິເສດ ແລະ ຈໍານວນ 50 ຈຸດ ຢູ່ບັນດາບໍລິສັດ, ພ້ອມທັງສໍາເລັດການພັດທະນາລະບົບແຈ້ງພາສີປະຕູດຽວແຫ່ງຊາດ (Lao National Single Window): ໂມດູນຄຸ້ມຄອງໃບຂົນສົ່ງແບບເອເລັກໂຕຣນິກ (Manifest) ລວມທັງການຂົນສົ່ງທາງອາກາດລະຫວ່າງປະເທດ(IATA) ແບບເອເລັກໂຕຣນິກ ໄດ້ທົດລອງນໍາໃຊ້ຢູ່ດ່ານຂົວມິດຕະພາບ I ໃນ 2 ປະເພດສິນຄ້າ ຄື: ພາຫະນະ ແລະ ນໍ້າມັນເຊື້ອໄຟ ແລະ ພວມດໍາເນີນການປັບປຸງ ໃຫ້ກວມເອົາທຸກປະເພດສິນຄ້າ ເຊິ່ງມາຮອດປັດຈຸບັນໄດ້ສໍາເລັດແລ້ວ 80% ຄາດຄະເນໃຫ້ໄດ້ນໍາສະເໜີ ແລະ ເປີດທົດລອງການນໍາໃຊ້ລະບົບ Manifest ຢູ່ດ່ານຂົວມິດຕະພາບ I ແລະ ດ່ານທ່າບົກ-ທ່ານາແລ້ງ ໃນທ້າຍເດືອນ ມິຖຸນາ ແລະ ເປີດນໍາໃຊ້ຕົວຈິງ ໃນເດືອນກັນຍາ 2022;

(2) ຫົວໜ່ວຍທຸລະກິດ ໃນທົ່ວປະເທດມີທັງໝົດ ຈໍານວນ 131.688 ຫົວໜ່ວຍ, ໃນນີ້: ໄດ້ເຂົ້າໃນລະບົບຄຸ້ມຄອງອາກອນແບບທັນສະໄໝ TaxRIS ແລ້ວ ຈໍານວນ 99.419 ຫົວໜ່ວຍ, ຖືບັນຊີຈໍານວນ 24.659 ຫົວໜ່ວຍ, ເຂົ້າອມພ ຈໍານວນ 22.900 ຫົວໜ່ວຍ, ຈຸນລະວິສາຫະກິດ ຈໍານວນ 45.413 ຫົວໜ່ວຍ, ອົງການຈັດຕັ້ງ ຈໍານວນ 3.433 ຫົວຫນ່ວຍ ແລະ ຫົວໜ່ວຍທີ່ມີລາຍຮັບທຸລະກິດ ປະຈໍາປີຕໍ່າກວ່າ

ອ່ານຕໍ່ສະບັບໜ້າ...

# ຕາງໜ້າຄະນະປະຈໍາ ສພຊ ປະກອບຄໍາເຫັນໃສ່ບົດລາຍງານ

ອ່ານຕໍ່ສະບັບກ່ອນ...

3) ຕໍ່ກັບແຜນວຽກຈຸດສຸມຍົກສູງປະສິດທິຜົນ ການຄຸ້ມຄອງລາຍຈ່າຍງົບປະມານຂອງລັດ ເປັນຕົ້ນ ດໍາລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ລົງວັນທີ 29/9/2021 ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດ, ການສ້າງແຜນຍຸດທະສາດແກ້ໄຂໜີ້ສິນສາທາລະນະ ໃນແຕ່ລະໄລຍະ ຍັງບໍ່ທັນຍົກໃຫ້ເຫັນ ແຫລ່ງທຶນຊໍາລະທີ່ແນ່ນອນ ແລະ ຊັດເຈນ, ແຫລ່ງທຶນດຸນດ່ຽງການຂາດດຸນງົບປະມານ ແລະ ຊໍາລະຕົ້ນທຶນ ເງິນກູ້ຢືມຕ່າງປະເທດ ຍັງສືບຕໍ່ອີງໃສ່ການກູ້ຢືມຈາກຕ່າງປະເທດ ແລະ ພາຍໃນ, ເຊິ່ງຍັງເປັນສາເຫດຂອງຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ໃນຕໍ່ໜ້າ;

4) ຕໍ່ກັບແຜນວຽກຈຸດສຸມການຮັກສາ ສະຖຽນລະພາບ ດ້ານເງິນຕາ ເຫັນວ່າ ການຈັດຕັ້ງປະຕິບັດຍັງພົບກັບ ຄວາມຫຍຸ້ງຍາກ ບໍ່ມີຄວາມຄືບໜ້າ ເປັນຕົ້ນ: ອັດຕາເງິນເຟີ້ເພີ່ມສູງຂຶ້ນ, ອັດຕາແລກປ່ຽນເງິນກີບ ກັບເງິນຕາຕ່າງປະເທດ ອ່ອນຄ່າແບບກ້າວກະໂດດຕໍ່ເນື່ອງ, ບໍ່ສາມາດປະຕິບັດໄດ້ຕາມຄາດໝາຍທີ່ໄດ້ກໍານົດ ໃນມະຕິຂອງສະພາແຫ່ງຊາດ ເຊິ່ງໄດ້ກາຍເປັນສິ່ງທ້າທາຍ, ມີຄວາມສ່ຽງສູງກະທົບຕໍ່ສະຖຽນລະພາບ ທາງດ້ານເສດຖະກິດມະຫາພາກ ມີຄວາມບອບບາງຫລາຍ ແລະ ຊີວິດການເປັນຢູ່ຂອງປະຊາຊົນໂດຍກົງ ບັນຫາຮ້ອນແຮງແມ່ນການຂາດສະພາບຄ່ອງດ້ານເງິນຕາຕ່າງປະເທດ ເພື່ອສະໜອງຄວາມຕ້ອງການໃຫ້ແກ່ການນໍາເຂົ້າ ນໍ້າມັນເຊື້ອໄຟຍັງບໍ່ພຽງພໍ, ລາຄານໍ້າມັນເພີ່ມຂຶ້ນຕໍ່ເນື່ອງ ໃນແຕ່ລະວັນ ເຮັດໃຫ້ມີທາງສຽງສັງຄົມ ທີ່ສົ່ງຜົນກະທົບຕໍ່ການບໍລິຫານ ຂອງລັດຖະບານ;

5) ຕໍ່ກັບແຜນວຽກຈຸດສຸມການຍົກສູງປະສິດທິພາບ ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ເຫັນວ່າການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ຍັງບໍ່ທັນເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງ, ການປະຕິບັດກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ຍັງບໍ່ທັນເຂັ້ມງວດ, ເດັດຂາດ ແລະ ມີຜົນສັກສິດເທົ່າທີ່ຄວນ, ຍັງມີການລະເມີດກົດໝາຍໃນສັງຄົມ ໃນຫລາຍກໍລະນີ; ການແກ້ໄຂຜົນການກວດສອບ ແລະ ກວດກາ ຍັງປະຕິບັດໄດ້ໜ້ອຍ ເປັນຕົ້ນ: ການເກັບກູ້ຄືນຊັບສິນ ແລະ ໜີ້ສິນຂອງລັດ, ການລົງວິໄນຕໍ່ຜູ້ລະເມີດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ການປະຕິບັດຄໍາຕັດສິນຂອງສານ ໃນຫລາຍກໍລະນີຍັງບໍ່ມີຜົນສັກສິດ.

4. ຕໍ່ກັບການຈັດຕັ້ງປະຕິບັດ 14 ມາດຕະການ

1) ການຈັດຕັ້ງປະຕິບັດມາດຕະການ ໂດຍລວມຍັງຊັກຊ້າ,

ອ່ານຕໍ່ໜ້າ 6...

# ຮອງນາຍົກລັດຖະມົນຕີ ລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ

ອ່ານຕໍ່ສະບັບກ່ອນ...

**2. ວຽກງານສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ.**

1) ການປະຕິຮູບກົນໄກຄຸ້ມຄອງລາຍຮັບ: ໄດ້ປະຕິບັດມາດຕະການ ຕາມຄໍາສັ່ງເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງລາຍຮັບ ແລະ ຕ້ານການຮົ່ວໄຫລ ຂອງລາຍຮັບງົບປະມານແຫ່ງລັດ ດ້ວຍການແກ້ໄຂການຮົ່ວໄຫລ ແລະ ການເກັບລາຍຮັບ ຈາກການນໍາເຂົ້າສິນຄ້າເຄື່ອງຂອງ, ເຄື່ອງກໍ່ສ້າງ, ເຄື່ອງໄຟຟ້າ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ການນໍາເຂົ້ານໍ້າມັນເຊື້ອໄຟ ແລະ ອື່ນໆ ດ້ວຍເຄື່ອງມືທັນສະໄໝໃນການແຈ້ງພາສີແບບເອເລັກໂທນິກ; ໄດ້ເອົາໃຈໃສ່ຂະຫຍາຍຖານລາຍຮັບ ຈາກອາກອນມູນຄ່າເພີ່ມ, ອາກອນກໍາໄລ ແລະ ອື່ນໆ ດ້ວຍເຄື່ອງມືທັນສະໄໝ.

- ໄດ້ກວດກາຄືນພາຫະນະທີ່ນໍາເຂົ້າບໍ່ຖືກຕ້ອງ ແລະ ນໍາໃຊ້ບໍ່ຖືກເປົ້າໝາຍ ສາມາດແກ້ໄຂແລ້ວທັງໝົດ 20,773 ຄັນ (ລົດໃຫຍ່ 10.016 ຄັນ ແລະ ລົດຈັກ 9.757 ຄັນ) ເກັບລາຍຮັບ ໄດ້ທັງໝົດ 314 ຕື້ກີບ ແລະ ຈະສືບຕໍ່ແກ້ໄຂຕື່ມ 9,698 ຄັນ (ລົດໃຫຍ່ 1.229 ຄັນ ແລະ ລົດຈັກ 8.469 ຄັນ) ທີ່ໄດ້ຂຶ້ນທະບຽນແລ້ວ ເປັນເງິນ 77 ຕື້ກີບ ໃຫ້ສໍາເລັດ ໃນທ້າຍເດືອນມິຖຸນາ 2022.
- ໄດ້ປັບປຸງກົນໄກການເກັບຄ່າບໍລິການຜ່ານຂົວມິດຕະພາບລາວ-ໄທ 3 ແຫ່ງ ຄື: ນະຄອນຫລວງວຽງຈັນ, ແຂວງຄໍາມ່ວນ ແລະ ແຂວງບໍ່ແກ້ວ ໂດຍຂະແໜງການຂອງລັດ ເປັນຜູ້ຄຸ້ມຄອງຈັດເກັບ ນັບແຕ່ວັນທີ 01/01/2022 ເປັນຕົ້ນມາ ສາມາດເກັບລາຍຮັບໄດ້ດີກວ່າເກົ່າ ແລະ ເພີ່ມຂຶ້ນຫລາຍສົມຄວນຖ້າທຽບໃສ່ພາກເອກະຊົນຈັດເກັບຜ່ານມາ.
- ໄດ້ທົດລອງຂຸດຄົ້ນ ແລະ ແລກປ່ຽນຊື້-ຂາຍເງິນຄຣິບໂຕ ເພື່ອເກັບລາຍຮັບເຂົ້າງົບປະມານ ທັງສ້າງເງື່ອນໄຂໃນການນໍາໃຊ້ໄຟຟ້າຢູ່ພາຍໃນປະເທດໃຫ້ຫລາຍຂຶ້ນ ເຊິ່ງທັງໝົດມີ 13 ບໍລິສັດ. ໃນນີ້, ມີ 11 ບໍລິສັດດໍາເນີນທຸລະກໍາຂຸດຄົ້ນເງິນຄຣິບໂຕ, ມີ 10 ບໍລິສັດທີ່ໄດ້ມອບຄ່າລິຂະສິດ ໃນການດໍາເນີນທຸລະກິດ ເປັນຈໍານວນເງິນ 5 ລ້ານໂດລາ ແລະ ໄດ້ສໍາເລັດການຈ່າຍພັນທະອາກອນແບບມອບເໝົາ ງວດທີ 1 ຂອງປີ 2022 ເປັນຈໍານວນເງິນ 6,5 ລ້ານໂດລາ, ສັງລວມແລ້ວ ສ້າງລາຍຮັບໄດ້ 11,5 ລ້ານໂດລາ, ສ່ວນບໍລິສັດອື່ນແມ່ນຢູ່ໃນຂັ້ນຕອນການກໍ່ສ້າງໂຮງງານຂຸດຄົ້ນ ຄາດຄະເນໂຄງການດັ່ງກ່າວຈະສາມາດປະກອບສ່ວນຈ່າຍພັນທະອາກອນໃຫ້ແກ່ລັດຖະບານ ເປັນຈໍານວນເງິນ 111 ລ້ານໂດລາຕໍ່ປີ. ສໍາລັບ 2 ບໍລິສັດ ທີ່ດໍາເນີນການຊື້-ຂາຍເງິນຄຣິບໂຕ, ເຊິ່ງປັດຈຸບັນແມ່ນຍັງບໍ່ໄດ້ຊໍາລະຄ່າລິຂະສິດໃຫ້ແກ່ລັດຖະບານ ເພາະຍັງຢູ່ໃນຂັ້ນຕອນກະກຽມຄວາມພ້ອມ ເພື່ອໃຫ້ທະນາຄານແຫ່ງ ສປປລາວ ລົງກວດກາຕົວຈິງ ແລະ ພິຈາລະນາອອກໃບອະນຸຍາດ.

2) ການອັດຊ່ອງວ່າງການຮົ່ວໄຫລຂອງງົບປະມານ: ໄດ້ເລັ່ງຂະຫຍາຍເຄື່ອງມືທັນສະໄໝ ໃນການຄຸ້ມຄອງການເກັບລາຍຮັບ ASYCUDA ຢູ່ 26 ດ່ານ, ຕິດຕັ້ງຊີງຊັ່ງທັນສະໄໝ 4 ແຫ່ງ (ລວມທັງຢູ່ບັນດາທ່າບົກທີ່ໄດ້ດໍາເນີນການບໍລິການ: ທ່ານາແລ້ງ, ສະຫັວນເຊໂນ ແລະ ວັງເຕົ່າ) ໃນຂອບເຂດທົ່ວປະເທດ, 6 ຈຸດຢູ່ເຂດເສດຖະກິດພິເສດ ແລະ ຈໍານວນ 50 ຈຸດ ຢູ່ບັນດາບໍລິສັດ. ພ້ອມທັງ ຊຸກຍູ້ຫົວໜ່ວຍທຸລະກິດເຂົ້າໃນລະບົບຄຸ້ມຄອງອາກອນແບບທັນສະໄໝ TaxRIS ແລະ ຂະຫຍາຍຖານອາກອນເຂົ້າໃນລະບົບອາກອນມູນຄ່າເພີ່ມ ໄດ້ເພີ່ມຂຶ້ນຫລາຍສົມຄວນ.

**3. ວຽກງານສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະທດ.**

ອ່ານຕໍ່ສະບັບໜ້າ...

## ສພຂ ຫລວງພະບາງສ້າງແຜນກຳນົດພະນັກງານ



(ສພຊ) ໃນວັນທີ 26-27 ພຶດສະພາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ ໄດ້ຈັດກອງປະຊຸມສ້າງແຜນກຳນົດພະນັກງານ-ຄຸ້ມຄອງ (ຂັ້ນແຂວງຄຸ້ມຄອງ) ຂອງ ສພຂ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ຄຳຄອງ ວົງທະປັນຍາ ຫົວໜ້າຄະນະຈັດຕັ້ງແຂວງ ແລະ ທ່ານ ສິງຕັນ ໄຊລືຊົ່ງ ຮອງປະທານ ສພຂ, ຄະນະສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ພະນັກງານ-ລັດຖະກອນ ເຂົ້າຮ່ວມ 48 ທ່ານ ຍິງ 17 ທ່ານ.

ກອງປະຊຸມຄັ້ງນີ້, ແມ່ນກອງປະຊຸມທີ່ມີເນື້ອໃນວຽກງານທີ່ສຳຄັນແມ່ນການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງ ສພຂ. ສະນັ້ນ, ຕ້ອງຍົກສູງຄວາມຮັບຜິດຊອບ ເພື່ອເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດດ້ວຍຄຸນນະພາບສູງ, ແມ່ນຕ້ອງກຳແໜ້ນມາດຖານເງື່ອນໄຂໃນມະຕິກົມການເມືອງສູນການພັກ ທີ່ໄດ້ກຳນົດໄວ້ເພື່ອເປັນບ່ອນອີງໃນການດຳເນີນທາບທາມ ແລະ ຄັດເລືອກເອົາບຸກຄົນ ເພື່ອເປັນເປົ້າໝາຍໃນການສ້າງເປັນຜູ້ສືບທອດປ່ຽນແທນຕຳແໜ່ງຕ່າງໆໃນຕໍ່ໜ້າ ແລະ ຍາວນານ ເພື່ອຮັບປະກັນດ້ານຄຸນພາບ ຄັດເລືອກໃຫ້ໄດ້ຄົນດີ, ມີຄວາມຮູ້ຄວາມສາມາດຕາມມາດຖານທີ່ກຳນົດໄວ້ ສພຂ ຈຶ່ງຈະມີຄວາມເຂັ້ມແຂງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງ ສພຂ ແຕ່ນີ້ຫາ ປີ 2025 ໃຫ້ບັນລຸຜົນສຳເລັດດ້ວຍຄຸນນະພາບສູງ ແລະ ສາມາດສ້າງພະນັກງານຜູ້ທີ່ດີ, ມີຄຸນທາດການເມືອງໜັກແໜ້ນ ແລະ ມີຄຸນສົມບັດສິນທຳປະຕິບັດ.

ທ້າຍນີ້, ປະທານກອງປະຊຸມຍັງໄດ້ເນັ້ນບັນຫາສຳຄັນຕື່ມອີກຕໍ່ກັບບັນຫາດ້ານອ່ອນຂໍ້ຄົງຄ້າງໃຫ້ໄດ້ ແລະ ເພີ່ມທະວີເອົາໃຈໃສ່ຕິດຕາມ, ກວດກາຢ່າງເປັນປົກກະຕິ ໃນການປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ ທັງຕ້ອງອອກແຮງ ແລະ ເພີ່ມທະວີໃນການຈັດຕັ້ງປະຕິບັດຕົວຈິງ ແຕ່ນີ້ຫາປີ 2025.

(ນັກຂ່າວ ສພຂ ຫລວງພະບາງ)

## ສພຂ ຊຽງຂວາງ ທາບທາມກົດໝາຍ 4 ສະບັບ



(ສພຊ) ໃນວັນທີ 30 ພຶດສະພາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ເປີດກອງປະຊຸມທາບທາມຮ່າງກົດໝາຍ 4 ສະບັບປັບປຸງ ແລະ ສ້າງໃໝ່ ທີ່ນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໂດຍການເປັນປະທານຂອງທ່ານ ນາງ ສົມພອນ ໂສພິລາວັນ ຮອງປະທານ ສພຂ; ເຂົ້າຮ່ວມມີຄະນະປະຈຳ ສພຂ, ມີຫົວໜ້າ-ຮອງຫົວໜ້າພະແນກກົມກອງທີ່ກ່ຽວຂ້ອງ, ປະທານ-ຮອງປະທານຄະນະກຳມະການ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ ສພຂ ເຂົ້າຮ່ວມ.

ທັງນີ້, ກໍເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍ 4 ສະບັບມີເນື້ອໃນຄົບຖ້ວນ ແລະ ຮັດກຸມທີ່ນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX.

ໃນທີ່ປະຊຸມ, ທ່ານ ເກົ້າມົວ ຊົວໂກ້ ປະທານຄະນະກຳມະການຍຸດຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຜ່ານບັນດາຮ່າງກົດໝາຍຈຳນວນ 4 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່) ແລະ ຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ(ສະບັບປັບປຸງ). ພ້ອມນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນຢ່າງກົງໄປກົງມາ ໂດຍມີການປັບປຸງຕໍ່ເນື້ອໃນຂອງຫລາຍມາດຕາຂອງຮ່າງກົດໝາຍ 4 ສະບັບດັ່ງກ່າວ ເພື່ອເຮັດໃຫ້ມີຄວາມຄົບຖ້ວນ, ຮັດກຸມ ເພື່ອລາຍງານຕໍ່ ສພຊ ແລະ ສາມາດນຳເຂົ້າພິຈາລະຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ໄດ້ຢ່າງມີປະສິດທິຜົນ.

ໂອກາດດັ່ງກ່າວ, ທ່ານ ນາງ ສົມພອນ ໂສພິລາວັນ ໄດ້ຍ້ອງຍໍຊົມເຊີຍຕໍ່ບັນດາຜູ້ແທນກອງປະຊຸມສຸມສະຕິປັນຍາໃນການຄົ້ນຄວ້າ, ປະກອບຄຳຄິດເຫັນ ໂດຍລົງເລິກບັນຫາທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍ ມີຄວາມສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ, ເປັນການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍຢ່າງລະອຽດ, ຮອບດ້ານ ແນໃສ່ເຮັດໃຫ້ຮ່າງກົດໝາຍມີເນື້ອໃນທີ່ຄົບຖ້ວນ, ຮັດກຸມ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

(ນາງ ສຸກສະຫວັນ ອິນທະແສງ)

## ຍົກສູງຄຸນນະພາບດ້ານການປະສານງານ ຮ່ວມກັບ 5 ພາກສ່ວນ




(ສພຊ) ໃນທ້າຍເດືອນພຶດສະພາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ມີພິທີເຊັນບົດບັນທຶກຮ່ວມລະຫວ່າງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ສພຂ ກັບອົງການໄອຍະການປະຊາຊົນ, ສານປະຊາຊົນ, ກຳລັງ ປກຊ, ກຳລັງ ປກສ ແລະ ສະຫະພັນນັກຮົບເກົ່າ ໂດຍການເຂົ້າຮ່ວມຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານ ສພຂ ອັດຕະປື, ມີບັນດາຄະນະກຳມະການ, ຄະນະເລຂາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

ໃນພິທີ, ໄດ້ຮັບຟັງ ແລະ ປະກອບຄຳຄິດຄຳເຫັນຕໍ່ຮ່າງບົດບັນທຶກຮ່ວມລະຫວ່າງ ຄຍປປ ກັບ 5 ພາກສ່ວນ ເພື່ອໃຫ້ມີເນື້ອໃນຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ. ຈາກນັ້ນ, ກໍໄດ້ລົງນາມເຊັນບົດບັນທຶກຮ່ວມກັນ.

ບົດບັນທຶກຮ່ວມໄດ້ກຳນົດຫລັກການ, ເນື້ອໃນ, ບັນດາວຽກ, ວິທີການ, ລະບອບປະຊຸມ ແລະ ມາດຕະການຈັດຕັ້ງປະຕິບັດການປະສານງານ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານມີຄວາມສະດວກວ່ອງໄວ ຮັບປະກັນໃນການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນ,ສານປະຊາຊົນ, ກຳລັງ ປກຊ, ກຳລັງ ປກສ ແລະ ສະຫະພັນນັກຮົບເກົ່າ ມີປະສິດຕິພາບ, ປະສິດທິຜົນ ແລະ ທັນຕາມກຳນົດເວລາດີຂຶ້ນເປັນກ້າວໆ.

(ວິນັດ)

## ສພຂ ຫລວງນ້ຳທາ ກະກຽມເນື້ອໃນກອງປະຊຸມສະໄໝສາມັນ



[illegible] 27 ພຶດສະພາ 2022 ທີ່ຫ້ອງປະຊຸມ ສພຂ ຫລວງນ້ຳທາ, ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ເປີດກອງປະຊຸມຄົ້ນຄວ້າ, ປຶກສາຫາລື ແລະ ກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ [illegible] ຮ່ວມກັບອົງການປົກຄອງແຂວງໃນຕໍ່ໜ້າ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມະນີ ປະທານ ສພຂ; ມີຄະນະຮອງປະທານ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຄະ[illegible] ຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມ, ບັນດາທ່ານຜູ້ແທນໄດ້ປະກອບຄຳຄິດເຫັນ, ຄົ້ນຄວ້າ, ປຶກສາຫາລື, ກະກຽມ ແລະ ເປັນເອກະພາບກັນຕໍ່ກັບແຜນດຳເນີນງານໃນການກະກຽມເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ທີ່ຈະນຳເຂົ້າໃນກອງປະຊຸມຮ່ວມກັບອົງການປົກຄອງແຂວງໃນຕໍ່ໜ້າ ເພື່ອຈະໄດ້ພ້ອມກັນປຶກສາຫາລື, ຄົ້ນຄວ້າ, ກະກຽມ ແລະ ຕົກລົງເປັນເອກະພາບກັນ ເພື່ອເຮັດໃຫ້ເນື້ອໃນທີ່ນຳເຂົ້າໃນກອງປະຊຸມຄັ້ງນີ້ ມີເນື້ອໃນຄົບຖ້ວນສົມບູນ ຮັບປະກັນຄຸນນະພາບ, ສອດຄ່ອງກັບສະພາບຕົວຈິງ ເພື່ອຮັບປະກັນໃຫ້ເນື້ອໃນດັ່ງກ່າວ ສາມາດນຳເຂົ້າຄົ້ນຄວ້າ, ພິຈາລະນາ ແລະ ທ່ວງທັນກັບເວລາ ຕາມກຳນົດທີ່ວາງໄວ້.

(ນາງ ວັນນີ ແຝງບົວວັນ)

## ສພຂ ອຸດົມໄຊ ຜ່ານແຜນການກະກຽມ ແລະ ດຳເນີນກອງປະຊຸມ



(ສພຊ) ຕອນບ່າຍຂອງຈັນທີ 20 ມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ເປີດກອງປະຊຸມຜ່ານແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II ໂດຍການເປັນປະທານຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານ ສພຂ, ມີບັນດາທ່ານໃນຄະນະປະຈຳ ສພຂ, ຄະນະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ, ທ່ານ ນາງ ວັນສີ ພວງມະໄລ ເລຂາທິການ ສພຂ ໄດ້ຜ່ານມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຊ່ອຍວຽກ, ຜ່ານແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II.

ທັງນີ້, ກໍເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມດັ່ງກ່າວ ບັນລຸຜົນສຳເລັດຕາມລະດັບຄາດໝາຍ ແລະ ເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ ໃນຖານະທີ່ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເປັນອົງການອຳນາດລັດຂັ້ນທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

ກອງປະຊຸມໄດ້ປະກອບຄຳຄິດຄຳເຫັນ, ປຶກສາຫາລືກັນຢ່າງກົງໄປກົງມາ ກ່ຽວກັບເນື້ອໃນທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອຸດົມໄຊ ຊຸດທີ II ເຊິ່ງຕາມແຜນຄາດຄະເນຈະໄດ້ສຸມໃສ່ ປະສານກັບພາກສ່ວນກ່ຽວຂ້ອງກ່ຽວກັບເນື້ອໃນສຳຄັນ ຈຳນວນ 11 ບັນຫາ ແລະ ເຫັນດີເປັນເອກະພາບກຳນົດວັນເວລາທີ່ຈະດຳເນີນກອງປະຊຸມຢູ່ໃນລະຫວ່າງວັນທີ 11-12 ສິງຫາ 2022 ທີ່ຈະມາເຖິງນີ້.

(ແສງພອນ ອິນນະລົງ)

# ຄສຜງ ຕິດຕາມການຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ




(ສພຊ) ເພື່ອເປັນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕາມມະຕິທີ່ສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ໄດ້ຮັບຮອງເອົາໃນກອງປະຊຸມ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນການ 6 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2022.

ເມື່ອຕົ້ນເດືອນມິຖຸນາ 2022 ທ່ານ ສົມບັດ ຈັນທະມາດ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ (ຄສຜງ) ສປນວ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານດັ່ງກ່າວຢູ່ພະແນກພະລັງງານ ແລະ ບໍ່ແຮ່ ນະຄອນຫລວງວຽງຈັນ (ນວ), ພະແນກແຜນການ ແລະ ການລົງທຶນ ນວ ແລະ ທ່ານ ນາງ ພົດສະໄໝ ຕົ້ນສະຫວັນ ຮອງປະທານ ຄສຜງ ສປນວ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາຢູ່ພະແນກການເງິນ ນວ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ນວ.

ໂອກາດໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານຈາກຜູ້ຕາງໜ້າໃຫ້ບັນດາພະແນກການ ລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະ 6 ເດືອນຕົ້ນປີ ເຊິ່ງເຫັນໄດ້ທັງຜົນງານ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າ ແລະ ວາງແຜນການທີ່ມີຈຸດສຸມໃນຕໍ່ໜ້າ ໂດຍສະເພາະແມ່ນພະແນກພະລັງງານ ແລະ ບໍ່ແຮ່ ນວ ໄດ້ລາຍງານໃຫ້ຮູ້ວ່າ: ໄລຍະ 6 ເດືອນ ຕົ້ນປີທີ່ຜ່ານມາ ໄດ້ນຳໃຊ້ງົບປະມານຂອງລັດ ເຂົ້າໃນການກໍ່ສ້າງ, ຕິດຕັ້ງການສຳຫລວດ ແລະ ພັດທະນາວຽກງານໃນຂົງເຂດທີ່ຕົນຮັບຜິດຊອບຢ່າງມີປະສິດທິຜົນ ເຊິ່ງໄດ້ຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ທັງໝົດ 8 ໂຄງການ, ປະກອບເອກະສານຂຶ້ນແຜນຊຳລະແລ້ວ 5 ໂຄງການ ແລະ ໄດ້ສຳເລັດໃນການຊຳລະແລ້ວ 1 ໂຄງການ ເທົ່າກັບ 4,54% ຂອງແຜນການ. ສາມາດຈັດເກັບລາຍຮັບຄ່າທຳນຽມເຂົ້າງົບປະມານໄດ້ 31,14% ແລະ ຄ່າບໍລິການວິຊາການໄດ້ 60,6% ທຽບໃສ່ແຜນການປີ 2022; ຊຸກຍູ້ບັນດາບໍລິສັດທີ່ດຳເນີນກິດຈະການບໍລິການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ໃຫ້ເອົາໃຈໃສ່ປະຕິບັດລະບຽບກົດໝາຍທີ່ວາງອອກຢ່າງຄົບຖ້ວນ ແລະ ປະກອບສ່ວນເຂົ້າໃນການພັດທະນາພື້ນຖານໂຄງລ່າງຂອງ ນວ; ສຶກສາຄວາມເປັນໄປໄດ້ໃນການຕິດຕັ້ງສະຖານີສາກພາຫະນະທີ່ຂັບເຄື່ອນດ້ວຍພະລັງງານໄຟຟ້າ ລວມທັງເກັບກຳຂໍ້ມູນລົດໄຟຟ້າ ແລະ ການເຊື່ອມຕໍ່ເຂົ້າລະບົບຕາຂ່າຍໄຟຟ້າໃນ ນວ. ພະແນກ ຍທຂ ນວ ໃຫ້ຮູ້ວ່າ: ໃນ 6 ເດືອນຕົ້ນປີ 2022 ໄດ້ເອົາໃຈໃສ່ສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນລົງທຶນຂອງລັດ ດ້ວຍການຄຸ້ມຄອງການກໍ່ສ້າງພື້ນຖານໂຄງລ່າງ, ຖະໜົນຫົນທາງ, ສ້ອມແປງບັນດາເສັ້ນທາງທີ່ເປ່ເພ ດ້ວຍການຖົມຂຸມນ້ອຍ, ຂຸມໃຫຍ່ ແລະ ຕາບຂຸມດ້ວຍຢາງຂື້ອ, ປຽນຝາປິດຂຸມພັກນ້ຳ, ອະນາໄມຮ່ອງລະບາຍນ້ຳຕາມແຄມເສັ້ນທາງພາຍໃນຕົວເມືອງ, ຄຸ້ມຄອງວຽກງານທາງນ້ຳ, ກໍ່ສ້າງຕາຝັ່ງເຈື່ອນ, ຄຸ້ມຄອງການປຸກສ້າງເຄຫາ-ຜັງເມືອງ ໃຫ້ຖືກຕ້ອງຕາມກົດໝາຍຜັງເມືອງ ແລະ ລະບຽບການ, ຄຸ້ມຄອງການຂົນສົ່ງທາງບົກ, ສຸມໃສ່ແກ້ໄຂການສັນຈອນແອອັດ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມຕົວເມືອງ ດ້ວຍການລົງກວດກາການປຸກສ້າງທີ່ເຮັດຜິດລະບຽບ ແລະ ແກ້ໄຂບັນຫາການຮ້ອງຟ້ອງຜົນກະທົບຈາກການກໍ່ສ້າງ, ກວດກາຄວາມຄືບໜ້າຂອງການປຸກສ້າງ ເພື່ອໃຫ້ເປັນໄປຕາມແບບທີ່ໄດ້ຮັບອະນຸຍາດໃນເບື້ອງຕົ້ນ ແລະ ບັນຫາອື່ນໆອີກຈຳນວນໜຶ່ງ.

ພ້ອມດຽວກັນນີ້, ຄະນະທີ່ເຄື່ອນໄຫວວຽກງານດັ່ງກ່າວ ກໍໄດ້ມີບາງຄຳຖາມເຈາະຈົ້ມ ທັງໄດ້ຮັບຟັງການຊີ້ແຈງຈາກບັນດາພະແນກການ ແລະ ແລກປ່ຽນບາງບັນຫາເຊິ່ງກັນແລະກັນ ເພື່ອຊອກຫາວິທີແກ້ໄຂຮ່ວມກັນໃນຕໍ່ໜ້າ.

(ນາງ ພອນທິບ ອິນທິລາດ)

# ປະທານ ສພຂ ຜົ້ງສາລີ ໃຫ້ສຳພາດກ່ຽວກັບການ ຊີ້ນຳ-ນຳພາ ແລະ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ

ຮຽບຮຽງໂດຍ: ກິງໃຈ ແສງອຳພັນ

ອ່ານຕໍ່ຈາກສະບັບກ່ອນ

ສະພາໃນແຕ່ລະໄລຍະ.

**4. ໃນຕໍ່ໜ້າ ສພຂ ປະຈຳເຂດເລືອກຕັ້ງ ຈະສຸມໃສ່ຈັດຕັ້ງປະຕິບັດເປົ້າໝາຍຫຍັງແດ່?.**

ເພື່ອຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດຂອງ ສພຂ ໃຫ້ມີຄຸນະພາບສູງ ແລະ ເຮັດການຈັດຕັ້ງປະຕິບັດວຽກງານຕ່າງໆທີ່ໄດ້ກຳນົດໄວ້ແຜນການຂອງຕົນໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້, ສພຂ ຜົ້ງສາລີ ຈະສຸມໃສ່ຈັດຕັ້ງປະຕິບັດວຽກງານຕົ້ນຕໍໃນຕໍ່ໜ້າ ດັ່ງນີ້:

1) ຊີ້ນຳ ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ, ບັນດາກົງຈັກການຈັດຕັ້ງທີ່ ສພຂ ສ້າງຕັ້ງ ເປັນເຈົ້າການ ແລະ ຮັບຜິດຊອບໂດຍກົງຕໍ່ ຄສຊ ປະຈຳເຂດເລືອກຕັ້ງ ກໍຄືຄະນະປະຈຳ ສພຂ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ຊຸກຍູ້ສະມາຊິກອົງການປົກຄອງແຂວງ ໃນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ເພື່ອເປັນເຄື່ອງມືໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ໃຫ້ມີຄວາມສອດຄ່ອງຕາມລະບຽບກົດໝາຍ ເພື່ອໃຫ້ສາມາດພິຈາລະນາ, ຮັບຮອງເອົາໃນກອງປະຊຸມປະຊຸມສະໄໝສາມັນເທື່ອທີ 3, 4 ຂອງ ສພຂ ຊຸດທີ II;

2) ເພີ່ມທະວີການຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ບົດລາຍງານຜົນການຕິດຕາມກວດກາການປັບປຸງຄຸນນະພາບລະບົບການຮຽນ-ການສອນ ໃນທຸກຂັ້ນທຸກສາຍໃນໄລຍະໃໝ່; ບົດລາຍງານຂອງຄະນະປະຈຳ ສພຂ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງ ສພຂ ຊຸດທີ II; ຄົ້ນຄວ້າບັນຫາພົ້ນເດັ່ນຂອງສັງຄົມ ເພື່ອກຳນົດຄຳຊັກຖາມຂອງສະພາປະຊາຊົນແຂວງໃຫ້ອົງການປົກຄອງແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ລາຍງານ, ຊີ້ແຈງ, ກຳນົດວິທີ, ມາດຕະການແກ້ໄຂ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ເທື່ອທີ 4 ຂອງ ສພຂ ຊຸດທີ II;

3) ເປັນເຈົ້າການປະສານສົມທົບກັບບັນດາອົງການປົກຄອງແຂວງ, ພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມສ້າງນິຕິກຳໃຕ້ກົດໝາຍ ເພື່ອສະເໜີໃຫ້ຄະນະປະຈຳສະພາປະຊາຊົນ ຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ເທື່ອທີ 4 ຂອງ ສພຂ ຊຸດທີ II ໃຫ້ໄດ້ 2 ສະບັບຄື: (1) ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຈັດບູນປະເພນີຕ່າງໆ ຢູ່ແຂວງຜົ້ງສາລີ ແລະ (2) ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການສ້າງກອງທຶນພັດທະນາກິລາກາຍະກຳຂອງແຂວງ, ເພື່ອໃຫ້ເປັນເຄື່ອງມືໃນການຄຸ້ມຄອງລັດ-ສັງຄົມ ດ້ວຍນິຕິກຳ, ກົດໝາຍ ແລະ ໃຫ້ມີຄວາມສອດຄ່ອງ ຕາມລະບຽບກົດໝາຍ ແລະ ເປັນທຳ;

4) ເອົາໃຈໃສ່ໃນການສ້າງແຜນການເຄື່ອນໄຫວຕິດຕາມກວດກາຂອງຄະນະປະຈຳ ສພຂ ເພື່ອລົງຕິດຕາມຊຸກຍູ້ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຜົນການແກ້ໄຂຕາມບົດສະຫລຸບຂາດຕົວ ຂອງອົງການກວດກາສອບທີ່ມອບໃຫ້ອົງການກວດກາແກ້ໄຂປະຈຳປີ 2020, ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການຈັດສັນແຜນງົບປະມານ, ຕິດພັນກັບໂຄງການລົງທຶນຂອງລັດປະຈຳປີ 2021, ຕາມມະຕິກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ຊຸດທີ II, ການຈັດຕັ້ງປະຕິບັດບັນດາຄາດໝາຍຕົວຊີ້ວັດ ໃນຂົງເຂດວັດທະນະທຳ-ສັງຄົມ, ຕິດຕາມກວດກາການປັບປຸງຄຸນນະພາບລະບົບການຮຽນ-ການສອນ ແລະ ການຈັດຕັ້ງປະຕິບັດ ມາດຕະການສະກັດກັ້ນ, ການລະບາດຂອງພະຍາດໂຄວິດ-19 ແລະ ບັນຫາອື່ນໆທີ່ເກີດຂຶ້ນ;

5) ສືບຕໍ່ຕິດຕາມກວດກາ ກ່ຽວກັບການແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການລົງທຶນຂອງລັດ, ການຊົດເຊີຍຜົນກະທົບຈາກການທະລຸເສັ້ນທາງ ແລະ ກໍ່ສ້າງເສົາໄຟຟ້າແຮງສູງຂອງເຂື່ອນນ້ຳອູ 4, 7 ຂອງລັດວິສາຫະກິດໄຟຟ້າລາວ, ສືບຕໍ່ຕິດຕາມກວດກາຕາມໜັງສືແຈ້ງຕອບຂອງຄະນະປະຈຳ ສພຂ ກ່ຽວກັບການການສະເໜີໃຫ້ອົງການປົກຄອງແຂວງ ແກ້ໄຂຕໍ່ກັບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຕໍ່ກັບຂໍ້ຂັດແຍ່ງການເກັບຊື້ຢາງພາລາ ລະຫວ່າງບໍລິສັດ ກັບເຈົ້າຂອງຢາງພາລາ ແລະ ຄຳຮ້ອງຂໍທົດແທນດິນຄືນ ຫລື ຊົດເຊີຍຜົນລະປູກທີ່ຖືກຜົນກະທົບຈາກໂຄງການພັດທະນາ; ຕິດຕາມກວດກາຜົນກະທົບຈາກໂຄງການພັດທະນາເທດສະບານແຂວງ ກ່ຽວກັບບັນຫາທີ່ດິນ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງໃຫ້ຮັບປະກັນຄວາມຖືກຕ້ອງ, ຍຸຕິທຳ ແລະ ທັນກັບເວລາ;

7) ຕິດຕາມການຈັດຕັ້ງປະຕິບັດ ມະຕິຂອງຄະນະປະຈຳສະ ສພຂ ວ່າດ້ວຍການຮັບຮອງເອົາ ການຈັດສັນແຜນງົບປະມານເກີນແຜນປະຈຳປີ 2020 ສະບັບເລກທີ 106/ຄຈປຂ,ວັນທີ 31/8/2021, ມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການຮັບຮອງເອົາແຜນການຈັດສັນງົບປະມານປະຈຳປີ 2021 ສະບັບເລກທີ ເລກທີ 94/ຄປຈຂ, ລົງວັນທີ 30/7/2021 ແລະ ບັນດາມະຕິ ແລະ ໜັງສືແຈ້ງຕອບຂອງຄະນະປະຈຳ ສພຂ ໃຫ້ອົງການປົກຄອງແຂວງຈັດຕັ້ງປະຕິບັດຈຳນວນໜຶ່ງ;

8) ຊີ້ນຳຄະນະກຳມະການປະສານສົມທົບກັບອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ປຶກສາຫາລື ແລະ ຕິດຕາມກວດກາການ ແກ້ໄຂບັນດາຄຳສະເໜີຂອງປະຊາຊົນໃນບັ້ນລົງພົບປະຫາຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນມະຕິກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝວິສາມັນ ເທື່ອທີ 1, ສະໄໝສາມັນ ເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ມະຕິກອງປະຊຸມຄັ້ງປະຖົມມະລຶກສະໄໝສາມັນເທື່ອທີ 2 ສພຂ ຊຸດທີ II ໃນຈຳນວນ 483 ຂໍ້, ໃນນີ້; 99 ຂໍ້ ພົວພັນເຖິງຂັ້ນແຂວງ ແລະ 384 ຂໍ້ພົວພັນເຖິງຂັ້ນເມືອງ. ພ້ອມທັງນຳເອົາຜົນການແກ້ໄຂ ເພື່ອລົງໄປຊີ້ແຈງໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ ໃນເວລາທີ່ລົງເຄື່ອນໄຫວຈັດຕັ້ງພົບປະຫາຍາຍເຜີຍຜົນສຳເລັດ ກອງປະຊຸມສະໄໝສາມັນ ເທື່ອທີ 3 ແລະ 4 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II.



# ກອງປະຊຸມທາບທາມຮ່າງກົດໝາຍ 4 ສະບັບ

(ສພຊ) ຕົ້ນເດືອນມິຖຸນາ 2022 ທີ່ຫ້ອງປະຊຸມຊັ້ນ 2 ຫໍວັດທະນະທຳໄກສອນພົມວິຫານ ແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ ຈຳນວນ 4 ສະບັບ ທີ່ນຳເຂົ້າພິຈາລະນາຮັບຮອງເອົາໃນກອງສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງປະກອບມີ: ຮ່າງກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ, ຮ່າງກົດໝາຍວ່າດ້ວຍວິຈິດສິນ, ຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ (ສະບັບປັບປຸງ ປີ 2022) ໂດຍການເປັນປະທານຂອງທ່ານ ກ່ອງແກ້ວ ມີວໍລະຈັກ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ມີບັນດາຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ, ບັນດາອົງການຈັດຕັ້ງມະຫາຊົນ, ພະແນກການອ້ອມຂ້າງແຂວງ, ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມ.



ກອງປະຊຸມທາບທາມຮ່າງກົດໝາຍຄັ້ງນີ້, ໄດ້ເປີດໂອກາດໃຫ້ບັນດາທ່ານຜູ້ແທນກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນຢ່າງກົງໄປກົງມາ ໂດຍມີການປັບປຸງຕໍ່ເນື້ອໃນຂອງຫລາຍມາດຕາຂອງຮ່າງກົດໝາຍ 4 ສະບັບ ເພື່ອເຮັດໃຫ້ມີຄວາມຄົບຖ້ວນ, ຮັດກຸມ ເພື່ອລາຍງານຕໍ່ສະພາແຫ່ງຊາດ ແລະ ສາມາດນຳເຂົ້າພິຈາລະຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຢ່າງມີປະສິດທິຜົນ.

ໂອກາດດຽວກັນນີ້, ປະທານກອງປະຊຸມກໍໄດ້ຍ້ອງຍໍຊົມເຊີຍຕໍ່ບັນດາທ່ານຜູ້ແທນກອງປະຊຸມທີ່ໄດ້ສຸມສະຕິປັນຍາໃນການຄົ້ນຄວ້າ, ປະກອບຄຳເຫັນໂດຍລົງເລິກກ່ຽວກັບບັນຫາທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍ ມີຄວາມສອດຄ່ອງກັບລັດຖະທຳມະນູນຂອງ ສປປລາວ, ຜົນສຳເລັດຂອງກອງປະຊຸມທາບທາມຮ່າງກົດໝາຍໃນຄັ້ງນີ້ ສະແດງເຖິງຄວາມເປັນເຈົ້າການ ແລະ ຄວາມເອົາໃຈໃສ່ຂອງບັນດາຜູ້ແທນກອງປະຊຸມ, ດັ່ງນັ້ນ ຈຶ່ງເຮັດໃຫ້ກອງປະຊຸມມີຄວາມເປັນເອກະພາບກັນທາງດ້ານທັດສະນະແນວຄິດ ແລະ ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

(ນັກຂ່າວ ສພຂ ສະຫວັນນະເຂດ)

**ຕໍ່ໜ້າ...**

ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕົວຈິງ ຂອງບາງຂະແໜງການ ແລະ ທ້ອງຖິ່ນ ຍັງບໍ່ທັນມີຄວາມເປັນເອກະພາບກັນ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດບາງມາດຕະການ ບໍ່ມີຄວາມຄືບໜ້າ ແລະ ບໍ່ມີປະສິດທິຜົນເທົ່າທີ່ຄວນ ເປັນຕົ້ນ ການສ້າງແຜນຊໍາລະໜີ້ສິນ ໄລຍະກາງ ແລະ ໄລຍະຍາວ, ການອັດຊ່ອງຫວ່າງຮົ່ວໄຫລຂອງລາຍຮັບງົບປະມານ, ການຫັນເປັນທັນສະໄໝໃນຂົງເຂດການເງິນ-ທະນາຄານ, ການຍົກສູງ ປະສິດທິພາບ ໂຄງການລົງທຶນຂອງລັດ, ການແກ້ໄຂບັນຫາການຫວ່າງງານ;

2) ການສົ່ງອອກຜະລິດຕະພັນສິນຄ້າທີ່ມີສັນຍາກັບປະເທດຄູ່ຄ້າມີບາງລາຍການບໍ່ບັນລຸຕາມແຜນການ, ການກໍານົດເຂດການຜະລິດຍັງບໍ່ທັນລະອຽດ ແລະ ຊັດເຈນ, ການຜະລິດກະສິກໍາຕິດພັນກັບການປຸງແຕ່ງຍັງບໍ່ທັນຫລາກຫລາຍ, ການເຂົ້າເຖິງແຫລ່ງທຶນຂອງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງມີຄວາມຫຍຸ້ງຍາກ ແລະ ບໍ່ທັນທົ່ວເຖິງ; ການຊຸກຍູ້ສົ່ງເສີມຜະລິດຕະພັນສໍາເລັດຮູບທີ່ມີແລ້ວ ໃຫ້ເຂົ້າເຖິງຕະຫລາດພາຍໃນ ແລະ ຕ່າງປະເທດ ຍັງເຮັດບໍ່ທັນໄດ້ດີ ເປັນຕົ້ນ ການໃຫ້ຄວາມຮູ້ດ້ານການສ້າງຍີ່ຫໍ້, ຫຸ້ມຫໍ່, ໂຄສະນາລວມທັງໂຜສະນາການຕ່າງໆ;

3) ການກໍ່ສ້າງ ແລະ ບູລະນະ ເສັ້ນທາງ ທີ່ຕິດພັນກັບ ການກໍ່ສ້າງ ທາງດ່ວນ, ທາງລົດໄຟ ແລະ ການຂົນສົ່ງ ແຮ່ທາດຕ່າງໆ ເພື່ອອໍານວຍຄວາມສະດວກ ໃຫ້ເຂົ້າເຖິງເຂດການຜະລິດ, ການທ່ອງທ່ຽວ ແລະ ການບໍລິການໂດຍສານ ຍັງບໍ່ມີຄວາມຄືບໜ້າ ເທົ່າທີ່ຄວນ;

4) ສໍາລັບໂຄງການ ຂຸດຄົ້ນແຮ່ເຫລັກ ແບບທົດລອງ ເຫັນວ່າ ມີການອະນຸຍາດໃຫ້ຫຼາຍບໍລິສັດ ເຮັດໃຫ້ ບໍ່ສາມາດຄຸ້ມຄອງ ໄດ້ຢ່າງມີປະສິດທິພາບ; ກົນໄກ ແລະ ຂັ້ນຕອນການຄັດເລືອກເອົາບໍລິສັດ ຍັງບໍ່ທັນໄປຕາມ ນິຕິກໍາ ທີ່ກໍານົດໄວ້ ຈຶ່ງບໍ່ສາມາດ ຄັດເລືອກໄດ້ ບໍລິສັດ ທີ່ເປັນມືອາຊີບ, ມີບົດຮຽນ, ປະສົບການ ແລະ ທຶນຮອນ ທີ່ແນ່ນອນ, ບໍລິສັດຈໍານວນໜຶ່ງ ບໍ່ສາມາດ ປະຕິບັດຕາມສັນຍາ ທີ່ໄດ້ເຊັນ ກັບ ລັດຖະບານ ເປັນຕົ້ນ ການຂຸດຄົ້ນ ແລະ ການສົ່ງອອກ ແຮ່ເຫລັກ ບໍ່ໄດ້ຕາມແຜນການ, ບໍ່ສອດຄ່ອງ ຕາມໃບອະນຸຍາດ ແລະ ຍັງມີລັກສະນະຈັບຈອງໄວ້ ໂດຍບໍ່ມີການເຄື່ອນໄຫວ ຈຶ່ງເຮັດໃຫ້ ບໍ່ສາມາດເກັບລາຍຮັບ ໄດ້ຕາມແຜນການ.

**II. ຕໍ່ກັບແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດ 6 ເດືອນທ້າຍປີ**

ຄະນະປະຈໍາສະພາແຫ່ງຊາດ ເຫັນດີຕໍ່ 5 ແຜນວຽກຈຸດສຸມ ແລະ 6 ມາດຕະການ ທີ່ລັດຖະບານ ສະເໜີມາ, ເຖິງຢ່າງໃດກໍຕາມ ຄະນະປະຈໍາສະພາແຫ່ງຊາດ ສະເໜີໃຫ້ ລັດຖະບານເອົາໃຈໃສ່ເພີ່ມເຕີມ ດັ່ງນີ້:

1. ຮີບຮ້ອນຈັດຕັ້ງ ເຜີຍແຜ່ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ແຜນວຽກຈຸດສຸມ 6 ເດືອນທ້າຍປີ ຂອງຂະແໜງການ ສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນ ແຜນວຽກລະອຽດ, ຈັດຕັ້ງປະຕິບັດໃຫ້ເປັນ ຮູບປະທໍາ ແລະ ມີປະສິດທິຜົນຕົວຈິງ, ພ້ອມທັງ ກໍານົດແຜນວຽກຈຸດສຸມ ວາລະແຫ່ງຊາດ ເຂົ້າໃນແຜນວຽກ ບຸລິມະສິດ ຂອງແຜນພັດທະນາ ເສດຖະກິດ-ສັງຄົມ, ແຜນເງິນຕາ ແລະ ແຜນງົບປະມານປະຈໍາປີ;

2. ຮີບຮ້ອນຫັນເປັນ ທັນສະໄໝ ໃນຂົງເຂດ ການເງິນ-ທະນາຄານ ເປັນຕົ້ນ ຂະຫຍາຍລະບົບການແຈ້ງພາສີ ເອເລັກໂຕນິກ (ASY-CUDA), ລະບົບຄຸ້ມຄອງ ລາຍຮັບສ່ວຍສາອາກອນ (TaxRis) ແລະ ການນໍາໃຊ້ລະບົບ ໂປແກຣມບັນຊີ (APIS, Bansi.la), ລະບົບການຊໍາລະອອນລາຍ ແລະ ອື່ນໆ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ ໃນຂອບເຂດທົ່ວປະເທດ; ຮີບຮ້ອນປັບປຸງ ດໍາລັດວ່າດ້ວຍ ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ໃຫ້ສໍາເລັດໂດຍໄວ ພ້ອມທັງ ຈັດສັນທີ່ດິນ, ການນໍາໃຊ້ທີ່ດິນ 3 ປະເພດປ່າ ແລະ ອອກໃບຕາດິນ ໃຫ້ຜູ້ທີ່ມີເງື່ອນໄຂ ເພື່ອທໍາການຜະລິດ; ແລະ ຮັບປະກັນ ການສະໜອງ ປັດໃຈສໍາຄັນ ແລະ ຈໍາເປັນໃຫ້ການຜະລິດ ໃນລະດູຝົນ ເພື່ອທົດແທນ ການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ;

3. ເອົາໃຈໃສ່ ຕິດຕາມກວດກາ, ປະເມີນ, ແກ້ໄຂບັນຫາ ແລະ ຜົນກະທົບ ຈາກໂຄງການເຮັດທົດລອງ ເປັນຕົ້ນ ໂຄງການຂຸດຄົ້ນແຮ່ທາດ ແລະ ເງິນຄຣິບໂຕ ໃຫ້ທັນການ, ພ້ອມທັງຖອດຖອນບົດຮຽນ ເພື່ອລາຍງານ ຕໍ່ກອງປະຊຸມສະໄໝສາມັນ ຄັ້ງຕໍ່ໄປ;

4. ຮີບຮ້ອນແກ້ໄຂ ບັນຫາຄົງຄ້າງ ເປັນຕົ້ນ ປະຕິບັດແຜນວຽກ ແລະ ນິຕິກໍາ ທີ່ໄດ້ກໍານົດແລ້ວ ໃຫ້ສໍາເລັດໂດຍໄວ ເປັນຕົ້ນ ດໍາລັດ ວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ, ລົງວັນທີ 29/9/2021; ຄົ້ນຄວ້າປັບປຸງ ກົດໝາຍ ທີ່ຕິດພັນກັບ ວຽກງານເງິນຕາ ເປັນຕົ້ນ ກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ ແລະ ກົດໝາຍວ່າດ້ວຍ ທະນາຄານ ທຸລະກິດ ກ່ຽວກັບການຊື້ຂາຍເງິນຕາ ເພື່ອຮັບປະກັນ ການຄຸ້ມຄອງ ເງິນຕາຕ່າງປະເທດ ແລະ ສະພາບຄ່ອງ ດ້ານເງິນຕາ ໃຫ້ພຽງພໍ ຕໍ່ການຈັດຊື້ ນໍ້າມັນເຊື້ອໄຟ ແລະ ສິນຄ້າອຸປະໂພກ-ບໍລິໂພກ ແລະ ອື່ນໆ ທີ່ຈໍາເປັນ ຕໍ່ການຜະລິດ ແລະ ການຊົມໃຊ້ໃນສັງຄົມ;

5. ຮັບຟັງຄໍາເຫັນ ຂອງສະມາຊິກ ສະພາແຫ່ງຊາດ ໃນວາລະຕໍ່ໄປ ແລະ ທາງສຽງຂອງສັງຄົມ ທີ່ຕິດພັນກັບ ການແກ້ໄຂ ຂໍ້ຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ເຊິ່ງເປັນບັນຫາໃໝ່ ທີ່ມີລັກສະນະເຄັ່ງຮ້ອນ ແລະ ກະທົບ ຕໍ່ຊີວິດການເປັນຢູ່ຕົວຈິງຂອງປະຊາຊົນ ໃນປະຈຸບັນ, ພ້ອມທັງຄົ້ນຄວ້າ ແລະ ອອກມາດຕະການ ແກ້ໄຂບັນຫາ ໃຫ້ທັນສະພາບການ ເພື່ອຮັບປະກັນ ສະຖຽນລະພາບ, ການດໍາລົງຊີວິດ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ.

**III. ຂໍ້ສະເໜີຂອງສະພາແຫ່ງຊາດ**

ຄະນະປະຈໍາສະພາແຫ່ງຊາດ ມີບາງຂໍ້ສະເໜີດັ່ງນີ້:

1. ສະເໜີລັດຖະບານ ກໍານົດແຜນຊໍາລະໜີ້ສິນໂຄງການລົງທຶນຂອງລັດ ໃຫ້ຈະແຈ້ງຢູ່ໃນແຜນການຈັດສັນໂຄງການລົງທຶນຂອງລັດ ປະຈໍາປີ 2023 ແລະ ສະເໜີຕໍ່ ກອງປະຊຸມ ສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາຮັບຮອງ;

2. ສະເໜີລັດຖະບານ ກວດກາຄືນ ບັນດາໂຄງການລົງທຶນຂອງລັດ ໃນປີ 2021 ແລະ ປີ 2022 ທີ່ຈະສືບຕໍ່ປະຕິບັດໃນ 6 ເດືອນທ້າຍປີ ໂຄງການໃດຄວນສືບຕໍ່ ແລະ ໂຄງການໃດຄວນສະລໍໄວ້, ທັງນັ້ນ ເພື່ອບໍ່ສ້າງໜີ້ສິນໃໝ່ ເພີ່ມຂຶ້ນຕື່ມ ທັງເປັນການປະຢັດ ມັດທະຍັດ ໃນສະພາບທີ່ເສດຖະກິດມະຫາພາກ ຍັງບໍ່ມີຄວາມສະຫງົບ; ກໍານົດຫຼັກການຈັດສັນງົບປະມານໂຄງການລົງທຶນຂອງລັດ ສໍາລັບໂຄງການສໍາເລັດ 100%, ໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່ ໃຫ້ເປັນເອກະພາບ ບົນຫລັກການຫັນການສ້າງແຜນຕາມຄວາມຕ້ອງການ ມາເປັນ ການສ້າງແຜນຕາມຄວາມສາມາດຊໍາລະຂອງງົບປະມານ;

3. ສະເໜີລັດຖະບານ ກວດກາ ແລະ ປະເມີນ ຕົວເລກດຸນການຄ້າ ແລະ ດຸນຊໍາລະສະສາງ ກັບຕ່າງປະເທດ ໃຫ້ມີຄວາມຊັດເຈນໂດຍສະເພາະ ມູນຄ່າການສົ່ງອອກ-ນໍາເຂົ້າ ແລະ ການຊໍາລະສະສາງທີ່ເປັນເງິນຕາຜ່ານລະບົບທະນາຄານ, ການຄຸ້ມຄອງເງິນຕາໃນ ແລະ ນອກລະບົບ, ການນໍາໃຊ້ເງິນກີບເພື່ອຊໍາລະສະສາງຢູ່ພາຍໃນປະເທດ;

4. ສະເໜີລັດຖະບານ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ສືບຕໍ່ປັບປຸງບັນດາກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ຕິດພັນກັບວາລະແຫ່ງຊາດ ເປັນຕົ້ນ ການສົ່ງເສີມການຜະລິດ, ການສ້າງຄວາມເຂັ້ມແຂງດ້ານງົບປະມານ, ການຄຸ້ມຄອງເງິນຕາຕ່າງປະເທດ, ການຄຸ້ມຄອງທະນາຄານທຸລະກິດ, ລະບົບການຊໍາລະ ລວມທັງການຂຸດຄົ້ນ, ແລກປ່ຽນ ແລະ ຊື້-ຂາຍ ເງິນຄຣິບໂຕ;

5. ສະເໜີລັດຖະບານ ປະເມີນໂຄງການເຮັດທົດລອງ ແຮ່ເຫລັກ, ແຮ່ທາດອື່ນໆ ແລະ ເງິນຄຣິບໂຕ ແລ້ວມາລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ຄັ້ງຕໍ່ໄປ;

6. ສະເໜີລັດຖະບານ ປະເມີນຜົນການຈັດຕັ້ງປະຕິບັດເຮັດທົດລອງການຫັນ 5 ຫົວໜ່ວຍວິຊາການ ກຸ້ມຕົນເອງທາງດ້ານງົບປະມານ ເພື່ອຖອດຖອນບົດຮຽນ ແລະ ເປັນບ່ອນອີງທີ່ດີໃນການຜັນຂະຫຍາຍໄປສູ່ຫົວໜ່ວຍວິຊາການອື່ນທີ່ມີເງື່ອນໄຂ ແລະ ສໍາເລັດການຄົ້ນຄວ້ານິຕິກໍາກ່ຽວກັບການຫັນເປັນພາລະກອນຢູ່ບັນດາຫົວໜ່ວຍວິຊາການ ໃຫ້ທັນມາລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

7. ສະເໜີລັດຖະບານ ໃຫ້ລັດຖະບານ ສະຫລຸບນະໂຍບາຍ ການແບ່ງເຂດການຜະລິດໃນທົ່ວປະເທດ, ນັບແຕ່ໄລຍະການປະຕິບັດແນວທາງການປ່ຽນແປງໃໝ່ຮອດປັດຈຸບັນ ມີທ່າອ່ຽງການຫັນປ່ຽນໂຄງປະກອບເສດຖະກິດ ລະຫວ່າງການຜະລິດ ກະສິກໍາ, ອຸດສາຫະກໍາ, ການບໍລິການ ແລະ ການຫັນເປັນຕົວເມືອງ ໃຫ້ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດໃນຄັ້ງຕໍ່ໄປ.

ທັງໝົດ ທີ່ກ່າວມານັ້ນ, ແມ່ນບາງຄໍາເຫັນ ຂອງຄະນະປະຈໍາສະພາແຫ່ງຊາດ ໃນນາມເປັນຕົວແທນ ຂອງປະຊາຊົນ ເພື່ອໃຫ້ລັດຖະບານ ນໍາໄປຄົ້ນຄວ້າ, ປັບປຸງ ແລະ ຈັດຕັ້ງປະຕິບັດ ວຽກງານ ດັ່ງກ່າວ ໃຫ້ສໍາເລັດຜົນ ເປັນຢ່າງດີ.

# ປະຕູສູ່ຄວາມສຸກ

**ໂດຍ: ຕົ້ນກົບເມກ**

ບາງຄົນອ່ານເຫັນຫົວຂໍ້ກໍອາດຄິດໄດ້ທັນທີຕາມທັດສະນະແຕກຕ່າງໂລດວ່າ ປະຕູສູ່ຄວາມສຸກ ຄືມີເງິນມີຊັບ, ມີລົດໃຫຍ່ຂີ່, ມີເຮືອນງາມຢູ່.... ແຕ່ທາງພຸດທະສາສະໜາໄດ້ຢືນຢັນລຽງລໍາດັບປະຕູສູ່ຄວາມສຸກໄວ້ທໍາອິດວ່າ ຄົນເຮົາຕ້ອງເລີ່ມຕົ້ນດ້ວຍ ສຸຂະພາບດີມາກ່ອນໝູ່ແລ້ວ ປັດໄຈອື່ນຈຶ່ງຕາມມາພາຍຫລັງ.

ພຸດທະສາສະໜາ ມີປະໂຫຍກຢືນຢັນໄວ້ແຈ້ງວ່າ: ອະໂຣຄະຍາ ປະຣະມາ ຣາພາ ເຊິ່ງແປຄວາມວ່າ: ບໍ່ມີພະຍາດບຽດບຽນເປັນເປັນໂຊກລາບອັນປະເສີດ; ບາງຄົນເຮັດວຽກໜັກຕິດຕໍ່ກັນດົນນານພຽງເພື່ອມີລາຍໄດ້ສູງ ແຕ່ພັກຜ່ອນໜ້ອຍ ເຮັດໃຫ້ສຸຂະພາບອ່ອນເພຍສ່ຽງຕໍ່ການເຈັບປ່ວຍໄຂ້ໄດ້ງ່າຍ; ດັ່ງນັ້ນ, ເຖິງແມ່ນວ່າມີຊັບຫລາຍ ແຕ່ສຸຂະພາບບໍ່ດີ ກໍໄຮ້ຄວາມໝາຍ; ບາງຄົນຂະຫຍັນເຮັດວຽກຈົນບໍານານເກັບເງິນຄໍາໄວ້ຫວັງວ່າຈະໄດ້ໃຊ້ຍາມພັກຜ່ອນ ແຕ່ໂຊກຮ້າຍຫລັງບໍານານໄດ້ເຂົ້າໂຮງໝໍ ບໍ່ໄດ້ໃຊ້ເງິນໃຫ້ເກີດຄວາມສຸກ ພໍອອກໂຮງໝໍກໍຈາກໄປແບບນີ້ກໍມີຫລາຍກໍລະນີທີ່ເປັນສັດຈະທໍາຂອງຊີວິດ.

ການບໍ່ມີພະຍາດເປັນໂຊກລາບອັນປະເສີດມັນເປັນປະຕູສູ່ຄວາມສຸກທີ່ແທ້ຈິງຂອງຊີວິດ ຕອນພະພຸດທະເຈົ້າຍັງມີຊີວິດ ປາກົດມີເດັກນ້ອຍຄົນໜຶ່ງໄດ້ຖາມພໍ່ຕົນເອງວ່າອັນໃດຄືຄວາມສຸກທີ່ແທ້ຈິງ; ພໍ່ຕອບບໍ່ໄດ້ຈຶ່ງໄດ້ໄປຂໍຄໍາຕອບຈາກພະພຸດທະເຈົ້າ ເຊິ່ງໄດ້ອະທິບາຍວ່າ: ສຸຂະພາບແຂງແຮງພາໃຫ້ເຮົາມີຄວາມສຸກ; ໄດ້ສະແຫວງຫາຊັບ ແລະ ໄດ້ຈ່າຍຊັບ ແຕ່ຖ້າວ່າຊີວິດມີແຕ່ເຈັບປ່ວຍໄຂ້ ເຖິງມີຊັບສົມບັດຫລວງຫລາຍກໍບໍ່ມີຄວາມສຸກ; ດັ່ງນັ້ນ, ການຮັກສາສຸຂະພາບ; ພັກຜ່ອນເປນເວລາ; ການບໍລິໂພກຕາມຫລັກໂພຊະນາການ ແລະ ການອອກກໍາລັງກາຍ ບັນດາປັດໄຈເຫລົ່ານີ້ຕ້ອງໄດ້ເຮັດເພື່ອຮັກສາສຸຂະພາບດີກວ່ານອນໃຊ້ເງິນໃນໂຮງໝໍບັ້ນປາຍຊີວິດ!



## ທັກທາຍ ລະບາຍ

**# ສາວຈົ້ມ**

**(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຖິ່ງພິທີການ)**

❋ ***ກອງ***ປະຊຸມສະພາ ເດີນທາງມາຮອດ***ອາທິດທີສອງ*** ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າທົ່ວປະເທດ ຈອບຊອມແນມສັງເກດຜ່ານສື່ຢ່າງໃຈຈົດໃຈຈໍ່ ບັນດາທ່ານ ສສຊ ກໍໄດ້ຕັ້ງເອີກຕັ້ງໃຈ ມີຄໍາເຫັນໃສ່ຫລາຍບັນຫາ ເດັ່ນກວ່າໝູ່ແມ່ນເງິນຕາ ຄ່າເຫລດລົງຫລຸດລ້ອງ ***ເງິນກີບຫລອງສິດລົ້ນ*** ດູແລຕົນໃຫ້ສູງຄ່າ ຫລາຍບັນຫາຖືກແກ້ ແລະ***ດີຂຶ້ນຢ່າງທີ່ເຫັນ*** ຊໍໃຫ້ເປັນ ແບບນີ້ ໄປຕະຫລອດຍາວນານ ***ທ່ານ ສສຊ ເອີຍ!*** ເອີ້ຍທຸກຄ່ານແທນປະຊາ ພ່າສັກສິດແກ້ ຊົມເປັນຕົວແທນໃຫ້ປະຊາລາວບັນດາເຜົ່າ ເວົ້າທຸກຄ່າເພື່ອໃຫ້ ປະຊາໄດ້ອີ່ມໜ່າ ***ຊອບແລ້ວ!***

❋ ***ຊົມ***ເຊີຍວັນແພດລາວ ***(18/6/1955-18/6/2022) ຄົບຮອບ 57 ປີ*** ຊໍອາໄສເອທີນີ້ ຝາກສົ່ງພອນໄຊ ຊໍໃຫ້ມີຄວາມສຸກ ເຂັ້ມແຂງທັນທ້າວ ***ນັກຮົບຊຸດຂາວບ້າໃຈກ້ວາງ*** ທານທະເລມີທຽມເທົ່າ ປະຊາລາວຫວັງເພິ່ງຊົ້ນ ***ແພດທຸກຄົນຊໍໃຫ້ສຸກລາບລົ້ນ*** ຍືນໜັ້ນຊົ່ວນິລັນ ***ທ່ານເອີຍ!***

❋ ***ນອກ***ຈາກຫລາຍບັນຫາ ທີ່ພອມກາຍປັບປະເດັນພົ້ນເດັ່ນໃນສັງຄົມປັດຈຸບັນ ໜຶ່ງໃນບັນນັ້ນກໍເຫັນວ່າ ***ໄຂ້ຍຸງລາຍ*** ຍັງສືບຕໍ່***ແຜ່ລະບາດຫລາຍພໍສົມຄວນ*** ຈຶ່ງເຊີນຊອນພີ່ນ້ອງເອົາໃຈໃສ່ດູແລ ຢ່າໄດ້ໄລເລີຍປະ ປ່ອຍໄປຕາມເລື່ອງ ເພາະວ່າໃນຕອນນີ້ ມີ***ສາມພັນກວ່າກໍລະນີ***ທີ່ເປັນປ່ວຍ ຊ່ວຍກັນປະຕິບັດຕາມເພີ່ນເວົ້າ ***ສາທາເນັ້ນໃສ່ທ້າຍ*** ນັ້ນແລ້ວ!

## ຊອບຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ຍ້ອນຫລັງດີ**

ທີ່ຟາມແຫ່ງໜຶ່ງ ສັດຕະວະແພດໄດ້ມາສັກຢາມ້າໂຕໜຶ່ງທີ່ກໍາລັງປ່ວຍຢູ່, ສັດຕະວະແພດເວົ້າກັບເຈົ້າຂອງຟາມວ່າ "ອີກສາມມື້ຖ້າມັນບໍ່ລຸກກິນຫຍ້າຈະຕ້ອງໄດ້ຂ້າຖິ້ມ" ເມື່ອໝູໄດ້ຍິນແນວນັ້ນຈຶ່ງໄປປຸກມ້າໃຫ້ລຸກ

- ສ່ຽວ! ລຸກໆ! ລຸກດຽວນີ້!
- ກູລຸກບໍ່ໄດ້ກູເມື່ອຍ
- ລຸກດຽວນີ້ໄວໆ
- ກະຍັງວ່າ ກູລຸກບໍ່ໄດ້
- ຄັນມຶງບໍ່ລຸກ ເຈົ້າຂອງຟາມຊິຂ້າມຶງຖິ້ມ ກູໄດ້ຍິນເຂົາລົມກັນ

ເມື່ອໄດ້ຍິນແນວນັ້ນມ້າກໍຮີບລຸກກິນຫຍ້າທັນທີ, ຕອນບ່າຍເຈົ້າຂອງຟາມມາເບິ່ງມ້າ ເຫັນມັນຍ່າງກິນຫຍ້າຢູ່ ລາວຈຶ່ງເວົ້າກັບເມຍວ່າ: ແມ່ມັນເອີຍ ມ້າເຮົາດີແລ້ວ ມື້ແລງເຮົາຕ້ອງຂ້າໝູສະຫລອງເອີ້ນສັດຕະວະແພດມາກິນບ່າ.



## ຄະຕິເຕືອນໃຈ

**# ດອກຂະຍອມ**

ໄວປາກເສຍສິນ
ໄວຕີນຕົກຕົ້ນໄມ້

## ຜົນການ...

ຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ພີ່ນ້ອງຊາວລາວທີ່ຢູ່ຕ່າງປະເທດ ໄດ້ຮັບຊາບທົ່ວເຖິງກັນ.

ກອງປະຊຸມ ສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ແຕ່ວັນທີ 13 ມິຖຸນາ 2022 ແລະ ຈະສືບຕໍ່ດຳເນີນໄປຈົນຮອດ ວັນທີ 8 ກໍລະກົດ 2022, ເຊິ່ງໃນວາລະທຳອິດກອງປະຊຸມໄດ້ພິຈາລະນາວຽກງານຂອງລັດຖະບານ ໂດຍທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ໄດ້ລາຍງານໂດຍສັງເຂບກ່ຽວກັບສະພາບພົ້ນເດັ່ນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຫລັງຈາກນັ້ນກອງປະຊຸມ ຍັງໄດ້ຮັບຟັງການລາຍງານເພີ່ມເຕີມ ຄື:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ໂດຍທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ;

2. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍ ປີ 2022 ໂດຍທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ;

3. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ໂດຍທ່ານ ສອນໄຊ ສິດພະໄຊ ອາດີດຜູ້ວ່າການທະນາຄານ ແຫ່ງ ສປປລາວ.

ບັນດາເນື້ອໃນ ທີ່ກ່າວມານັ້ນລ້ວນແຕ່ເປັນບັນຫາສຳຄັນພື້ນຖານຂອງປະເທດຊາດ ເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ໃຫ້ນັບມື້ນັບເຂັ້ມແຂງ. ດັ່ງນັ້ນ, ພາຍຫລັງທີ່ໄດ້ຮັບຟັງການລາຍງານຂອງລັດຖະບານແລ້ວ ຂ້າພະເຈົ້າໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດປະກອບຄຳເຫັນ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ ໄດ້ຊັກຖາມຕໍ່ລັດຖະບານ ດ້ວຍຄວາມຮັບຜິດຊອບສູງ, ພ້ອມທັງສະເໜີກົນໄກ, ວິທີການ ແລະ ມາດຕະການ ເພື່ອໃຫ້ລັດຖະບານນຳໄປຄົ້ນຄວ້າປັບປຸງ ແລະ ແກ້ໄຂ ໃນຕໍ່ໜ້າໃຫ້ສອດຄ່ອງກັບສະພາບ ແລະ ເງື່ອນໄຂຄວາມເປັນຈິງ ຂອງປະເທດເຮົາ. ໂດຍສະເພາະແມ່ນການແກ້ໄຂບັນດາຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດບັນດາແຜນການດັ່ງກ່າວ ໃນໄລຍະເຄິ່ງປີຜ່ານມາ ເພື່ອເປັນບົດຮຽນ ໃນການກຳນົດທິດທາງວຽກງານຈຸດສຸມ 6 ເດືອນທ້າຍປີ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ. ຕໍ່ຄຳເຫັນ ແລະ ຄຳຊັກຖາມ ຂອງສະມາຊິກສະພາແຫ່ງຊາດ ມີທັງໝົດ 68 ເທື່ອຄົນ, ຍິງ 11 ເທື່ອຄົນ. ສະນັ້ນ ຂ້າພະເຈົ້າ ຂໍສັງລວມບາງຄຳເຫັນທີ່ມີເນື້ອໃນພົ້ນເດັ່ນດັ່ງນີ້:

**I. ຕໍ່ກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ມີຄຳເຫັນຄື:**

1. ສະເໜີໃຫ້ສູ້ຊົນຮັກສາລະດັບອັດຕາການເຕີບໂຕຂອງເສດຖະກິດ ໄວ້ທີ່ລະດັບ 4,4% ເພາະຄາດວ່າມີຄວາມເປັນໄປໄດ້ ອີງໃສ່ສະພາບເງື່ອນໄຂຕົວຈິງຂອງບັນດາຂະແໜງການ ເຫັນວ່າມີທ່າແຮງ ແລະ ຄວາມອາດສາມາດ ໃນການຈັດເກັບລາຍຮັບເຂົ້າງົບປະມານ ໃນທ້າຍປີ 2022;

2. ຮີບຮ້ອນສະໜອງປັດໃຈການຜະລິດກະສິກຳ ໃຫ້ຊາວກະສິກອນເພື່ອຮັບໃຊ້ການຜະລິດໃນລະດູຝົນໃຫ້ພຽງພໍ ເປັນຕົ້ນ ແນວພັນພືດ, ແນວພັນສັດ, ຝຸ່ນ ແລະ ປຸ໋ຍ. ພ້ອມທັງຊຸກຍູ້ສົ່ງເສີມ ໃຫ້ຜູ້ຜະລິດເອົາໃຈໃສ່ໃນການທຳການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ໃຫ້ເປັນຮູບປະທຳ ຕາມສັນຍາການສົ່ງອອກທີ່ໄດ້ເຊັນກັບຕະຫລາດຕ່າງປະເທດ;

3. ຮີບຮ້ອນຕັດສິນໃຈແກ້ໄຂບັນຫາລາຄາສິນຄ້າສູງ, ນ້ຳມັນແພງ, ເງິນເຟີ້ ແລະ ຊຸກຍູ້ການຜະລິດຢ່າງຈິງຈັງ ເພື່ອຮັບປະກັນບໍ່ໃຫ້ມີການຂາດແຄນອາຫານໃນປີຕໍ່ໄປ, ປຸກລະດົມນ້ຳໃຈຮັກຊາດ ແລະ ສ້າງຄ່ານິຍົມໃຫ້ຄົນລາວ ຫັນມາໃຊ້ຜະລິດຕະພັນຂອງລາວຫລາຍຂຶ້ນ, ເຂັ້ມງວດການນຳເຂົ້າສິນຄ້າ ທີ່ສາມາດຜະລິດໄດ້ພາຍໃນ, ພ້ອມທັງຄົ້ນຄວ້າການນຳເຂົ້ານ້ຳມັນຈາກຫລາຍແຫລ່ງ ແລະ ຊຳລະດ້ວຍເງິນສະກຸນອື່ນ ນອກຈາກສະກຸນເງິນໂດລາ;

4. ຮີບຮ້ອນເອົາໃຈໃສ່ການຈັດເກັບລາຍຮັບ ຈາກຖານລາຍຮັບທີ່ໝັ້ນຄົງ, ນຳໃຊ້ເຄື່ອງມືທັນສະໄໝຜ່ານລະບົບທະນາຄານໃຫ້ຄົບຖ້ວນ, ສະເໜີໃຫ້ແບ່ງຂັ້ນຄຸ້ມຄອງ ໃນການຈັດເກັບອາກອນ ເປັນຕົ້ນການເກັບຄ່າທຳນຽມ ແລະ ອາກອນ ທີ່ດິນ, ການຄ້າອອນລາຍ, ການຊື້-ຂາຍເງິນຄຣິບໂຕ ແລະ ອື່ນໆ ຜ່ານລະບົບທະນາຄານ ແລະ ບ້ານ. ພ້ອມທັງຄຸ້ມຄອງແຫລ່ງລາຍຮັບ ທີ່ເປັນເງິນຕາຈາກແຫລ່ງຕ່າງໆ ເປັນຕົ້ນ ທຶນຈົດທະບຽນການລົງທຶນຕ່າງປະເທດ, ການສົ່ງອອກສິນຄ້າ (ໄຟຟ້າ, ແຮ່ທາດ, ອຸດສາຫະກຳປຸງແຕ່ງ, ກະສິກຳ,...) ຜ່ານລະບົບທະນາຄານ ໃຫ້ຄົບຖ້ວນ, ແນໃສ່ຮັບປະກັນການສະໜອງເງິນຕາໃຫ້ພຽງພໍຕໍ່ການຈັດຊື້ນ້ຳມັນເຊື້ອໄຟ ແລະ ສິນຄ້າອຸປະໂພກ-ບໍລິໂພກອື່ນໆ ທີ່ຈຳເປັນຕໍ່ການຜະລິດ ແລະ ການຊົມໃຊ້ໃນສັງຄົມ;

5. ຮີບຮ້ອນແກ້ໄຂບັນຫາການຊື້-ຂາຍເງິນຕາ ນອກລະບົບ, ຫລຸດຜ່ອນຄວາມແຕກໂຕນ ລະຫວ່າງອັດຕາແລກປ່ຽນຂອງທະນາຄານ ແລະ ອັດຕາແລກປ່ຽນພາຍນອກ, ຈຳກັດການນຳໃຊ້ເງິນຕາທີ່ຊະຊາຍ, ປະຕິວັດການແລກປ່ຽນເງິນຕາຜ່ານລະບົບທະນາຄານເປັນອັດຕາດຽວ, ກຳນົດອັດຕາສ່ວນການຖືຄອງເງິນຕາ ໃຫ້ບຸກຄົນ, ນິຕິບຸກຄົນ ໃຫ້ຈະແຈ້ງຊັດເຈນ, ດຳເນີນມາດຕະການລົງໂທດທີ່ເດັດຂາດ ຕໍ່ບຸກຄົນ ຫລື ນິຕິບຸກຄົນທີ່ປັ່ນປ່ວນ ເຮັດໃຫ້ອັດຕາແລກປ່ຽນມີການຜັນຜວນ ແລະ ຜູ້ທີ່ກັກຕຸນເງິນຕາໄວ້, ພ້ອມທັງມອບໃຫ້ທະນາຄານທຸລະກິດ ເຮັດທຸລະກຳແລກປ່ຽນເງິນຕາດ້ວຍຕົນເອງ ຕາມອັດຕາແລກປ່ຽນປະຈຳວັນ ທີ່ທະນາຄານແຫ່ງ ສປປລາວ ກຳນົດ;

6. ເອົາໃຈໃສ່ການໂຄສະນາ ແລະ ສົ່ງເສີມ ການນຳໃຊ້ເງິນກີບ ໃຫ້ກວ້າງຂວາງ ແລະ ຖືກຕ້ອງ ຕາມກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ເປັນຕົ້ນ ການກຳນົດລາຄາສິນຄ້າ, ການຊຳລະສິນຄ້າ ແລະ ການຈ່າຍເງິນເດືອນຄ່າແຮງງານ;

7. ເອົາໃຈໃສ່ການຈັດສັນງົບປະມານ ໂຄງການລົງທຶນຂອງລັດສຳລັບປີ 2023 ໃຫ້ສຳເລັດ ໃນທ້າຍປີ 2022 ໃຫ້ທັນຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ, ພ້ອມທັງກຳນົດຫລັກການຈັດສັນງົບປະມານໂຄງການລົງທຶນຂອງລັດ ໃຫ້ຈະແຈ້ງຊັດເຈນ ຕໍ່ໂຄງການທີ່ສຳເລັດແລ້ວ, ໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່ ແລະ ພິຈາລະນາຮັບຮອງເອົາໂຄງການທີ່ເປັນບຸລິມະສິດຂອງທ້ອງຖິ່ນ ໃຫ້ໄດ້ເຂົ້າແຜນ, ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ, ໃຫ້ທັນການ ແລະ ສາມາດຈັດຕັ້ງປະຕິບັດໄດ້;

8. ເອົາໃຈໃສ່ຈັດສັນງົບປະມານ ໃສ່ໂຄງການກໍ່ສ້າງເສັ້ນທາງ ຢູ່ເຂດຫ່າງໄກສອກຫລີກ ເພື່ອຮັບໃຊ້ການຜະລິດ ແລະ ອຳນວຍຄວາມສະດວກ ໃນການເດີນທາງໄປ-ມາ ຂອງນັກຮຽນ ລວມທັງໂຄງການທີ່ມີຄວາມສຳຄັນທາງດ້ານຍຸດທະສາດຊາຍແດນ ທີ່ກໍ່ສ້າງມາແລ້ວຫລາຍປີແລ້ວ ແຕ່ໄດ້ຮັບງົບປະມານການຊຳລະໜ້ອຍ ເຮັດໃຫ້ບໍ່ສາມາດສືບຕໍ່ໃຫ້ສຳເລັດ;

9. ສະເໜີໃຫ້ຄົ້ນຄວ້າ ແລະ ຈັດສັນງົບປະມານ ເຂົ້າໃສ່ການປະຕິບັດນະໂຍບາຍ ຕໍ່ຜູ້ມີຄຸນງາມຄວາມດີຕໍ່ການປະຕິວັດຊາດ ປະຊາທິປະໄຕ ໃຫ້ສົມຄູ່ກັບຄວາມສາມາດດ້ານງົບປະມານຕົວຈິງ;

10. ສະເໜີໃຫ້ຮີບຮ້ອນແກ້ໄຂບັນຫາໄພຫວ່າງງານ ແລະ ຄຸ້ມຄອງແຮງງານລາວ ທີ່ເຄື່ອນຍ້າຍໄປເຮັດວຽກ ຢູ່ເຂດເສດຖະກິດພິເສດ ແລະ ໄປອອກແຮງງານ ຢູ່ຕ່າງປະເທດ ເພື່ອໃຫ້ມີຄວາມປອດໄພ ແລະ ໄດ້ຮັບການປົກປ້ອງ; ພ້ອມທັງດຸ່ນດ່ຽງແຮງງານພາຍໃນ ແລະ ແຮງງານລາວ ໄປຕ່າງປະເທດ, ພັດທະນາສີມືແຮງງານທີ່ເປັນແຮງງານດິບ ແລະ ສີມືແຮງງານຕ່ຳ ເພື່ອຮັບປະກັນສະໜອງແຮງງານໃຫ້ຕະຫລາດແຮງງານ ຢູ່ພາຍໃນປະເທດ ໃຫ້ພຽງພໍ.

**II. ຕໍ່ຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ມີຄຳເຫັນ ຄື:**

1. ການປະຕິບັດວາລະແຫ່ງຊາດ ຂອງຂະແໜງການສູນກາງ ແລະ ທ້ອງຖິ່ນ ຍັງບໍ່ມີຄວາມເປັນເອກະພາບ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ຄວາມຮຸນແຮງຂອງບັນຫາ ແລະ ບໍ່ທັນເດັດຂາດ ໃນການແກ້ໄຂບັນຫາ ທີ່ພົວພັນກັບຂະແໜງການຂອງຕົນ ໃຫ້ມີໝາກຜົນຕົວຈິງ, ຍັງຊັກຊ້າ, ມີການເອື່ອຍອີງ ແລະ ຖິ້ມຄວາມຮັບຜິດຊອບໃສ່ກັນ; ການແກ້ໄຂບັນຫາ ແລະ ການກຳນົດບັນດາມາດຕະການບ່ອນທີ່ມີໂຄງການທົດລອງ ຍັງບໍ່ທັນໂປ່ງໃສ, ຍັງບໍ່ໄດ້ມີສ່ວນຮ່ວມແຕ່ຫົວທີຂອງອົງການປົກຄອງ ແລະ ປະຊາຊົນ ຢູ່ທ້ອງຖິ່ນ, ປະຊາຊົນເອງ ກໍຍັງບໍ່ທັນເຂົ້າໃຈ ແລະ ຍັງຂັດຂ້ອງ;

2. ການປະຕິບັດວາລະແຫ່ງຊາດ ຍັງບໍ່ທັນໄປຕາມຫລັກການທີ່ເປັນມືອາຊີບ, ການຄົ້ນຄວ້າວາງແຜນຍັງຂາດລັກສະນະວິທະຍາສາດ, ຍັງບໍ່ທັນໄດ້ນຳໃຊ້ວິຊາການ ຜູ້ທີ່ມີຄວາມຮູ້ ຄວາມຊຳນານ ແລະ ປະສົບການທີ່ແນ່ນອນ, ທີ່ສອດຄ່ອງກັບຄວາມຕ້ອງການຂອງໜ້າວຽກ, ການຕິດຕາມກວດກາ ແລະ ການປະເມີນຜົນຍັງບໍ່ທັນມີ ການວິເຄາະ-ວິໄຈ ຢ່າງເລິກເຊິ່ງ ແລະ ການລາຍງານຜົນ ຍັງບໍ່ທັນເປັນປົກກະຕິ ແລະ ຕໍ່ເນື່ອງ (ລາຍງານທຸກໆ 3 ເດືອນ);

3. ສະເໜີໃຫ້ເອົາໃຈໃສ່ຈັດສັນ ແລະ ແບ່ງເຂດດິນກະສິກຳ ເພື່ອການຜະລິດສະໜອງພາຍໃນ ແລະ ເປັນສິນຄ້າສົ່ງອອກ ຕາມທ່າແຮງ ແລະ ຄວາມເໝາະສົມ ຂອງແຕ່ລະທ້ອງຖິ່ນໃຫ້ຈະແຈ້ງ; ສົ່ງເສີມຂອດການຜະລິດເປັນສິນຄ້າ ເພື່ອສົ່ງອອກ ແລະ ການຫັນປ່ຽນຈາກສັງຄົມບໍລິໂພກ ໄປເປັນສັງຄົມການຜະລິດ ໂດຍສະເພາະການປັບປຸງກຳລັງການຜະລິດເປັນກຸ່ມ ຫລື ສະຫະກອນ, ແກ້ໄຂຂອດຂັ້ນການດຳເນີນເອກະສານນຳເຂົ້າ-ສົ່ງອອກ ໃຫ້ຄ່ອງຕົວກວ່າເກົ່າ; ຮັບປະກັນຄວາມເຂັ້ມແຂງທາງດ້ານບຸກຄະລາກອນໃນຂົງເຂດກະສິກຳ ແລະ ປ່າໄມ້;

4. ການຫັນເປັນທັນສະໄໝແບບດີຈີຕອນ ໃນການຈັດເກັບລາຍຮັບ ເຫັນວ່າລະບົບ ແລະ ເຄື່ອງມືອຸປະກອນທີ່ນຳໃຊ້ໃນປະຈຸບັນ ມີອາຍຸການດົນ, ບໍ່ໄດ້ມີການປັບປຸງ (Update) ປົກກະຕິ ແລະ ຕໍ່ເນື່ອງ ເຮັດໃຫ້ມີຊ່ອງວ່າງການຮົ່ວໄຫລຂອງງົບປະມານ;

5. ຜູ້ແທນເຫັນວ່າ ແຫລ່ງລາຍຮັບໃໝ່ ຍັງບໍ່ທັນຫລາກຫລາຍ, ມີພຽງແຕ່ແຮ່ທາດ ແລະ ຂຸດຄົ້ນເງິນຄຣິບໂຕ ເຊິ່ງເປັນແຫລ່ງລາຍຮັບ ທີ່ບໍ່ທັນແນ່ນອນ ເນື່ອງຈາກວ່າ ເປັນການເຮັດທົດລອງ ແລະ ປັດໃຈດ້ານລາຄາຍັງມີຄວາມສ່ຽງ, ແຫລ່ງລາຍຮັບທີ່ມີ ແລະ ໝັ້ນຄົງ ກໍຍັງເກັບບໍ່ໄດ້ຄົບຖ້ວນ ເປັນຕົ້ນ ລາຍຮັບຈາກທີ່ດິນ ແລະ ຄ່າທຳນຽມທາງ;

6. ການຍົກສູງປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານຂອງລັດ ເປັນຕົ້ນ ດຳລັດວ່າດ້ວຍ ລົດຂອງລັດ ເລກທີ 599/ລບ ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ໂດຍສະເພາະຄວາມເປັນເຈົ້າການຂອງພະນັກງານລັດ ກໍຄືຜູ້ທີ່ນຳໃຊ້ ແລະ ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ;

7. ຜູ້ແທນສະເໜີໃຫ້ກວດກາ ແລະ ປະເມີນຄືນ ຕົວເລກດຸນການຄ້າ ແລະ ດຸນຊຳລະສະສາງ ກັບຕ່າງປະເທດ ໃຫ້ມີຄວາມຊັດເຈນ ໂດຍສະເພາະມູນຄ່າການສົ່ງອອກ-ນຳເຂົ້າ ແລະ ການຊຳລະສະສາງ ທີ່ເປັນເງິນຕາຜ່ານລະບົບທະນາຄານ, ການຄຸ້ມຄອງລະບົບການຊຳລະສະສາງ ແລະ ແລກປ່ຽນເງິນຕາ ຜ່ານລະບົບທະນາຄານ, ການນຳໃຊ້ເງິນກີບ ເພື່ອຊຳລະສະສາງຢູ່ພາຍໃນປະເທດ, ພ້ອມທັງ ຄົ້ນຄວ້າວິທີການ ແລະ ກົນໄກ ການມີສ່ວນຮ່ວມ ຂອງທະນາຄານ ແຫ່ງ ສປປລາວ ໃນການຕິດຕາມ ແລະ ຢັ້ງຢືນ ມູນຄ່າການສົ່ງອອກສິນຄ້າ ກັບຂະແໜງການທີ່ກ່ຽວຂ້ອງ;

8. ຜູ້ແທນເຫັນວ່າ ການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຍັງບໍ່ທັນເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງ, ການປະຕິບັດກົດໝາຍ ແລະ ນິຕິກຳ ໃຕ້ກົດໝາຍຍັງບໍ່ທັນ ເຂັ້ມງວດ, ເດັດຂາດ ແລະ ບໍ່ມີຜົນສັກສິດເທົ່າທີ່ຄວນ, ຍັງມີການລະເມີດກົດໝາຍໃນສັງຄົມ ໃນຫລາຍກໍລະນີ; ການລົງວິໄນຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ການປະຕິບັດ ຄຳຕັດສິນຂອງສານ ໃນຫລາຍກໍລະນີ ຍັງບໍ່ມີຜົນສັກສິດ ແລະ ຍັງບໍ່ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ທີ່ກ່າວມານັ້ນ, ແມ່ນບາງຄຳເຫັນ ແລະ ຄຳຊັກຖາມ ທີ່ພົ້ນເດັ່ນຂອງບັນດາທ່ານ ສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານເຊິ່ງບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ ຈາກກະຊວງກ່ຽວຂ້ອງ ກໍໄດ້ຊີ້ແຈງ, ອະທິບາຍ ແລະ ໄດ້ຕອບ-ຖາມກັບທີ່ ຕໍ່ຄຳຖາມຂອງສະມາຊິກສະພາແຫ່ງຊາດ ທີ່ໄດ້ຍົກຂຶ້ນໃນກອງປະຊຸມ. ອີງຕາມວາລະກອງປະຊຸມໃນວັນທີ 8 ກໍລະກົດ 2022 ທີ່ຈະມາເຖິງນີ້ ກອງປະຊຸມຈະໄດ້ລົງຄະແນນສຽງຮັບຮອງເອົາບົດລາຍງານດັ່ງກ່າວ ເປັນມະຕິຂອງກອງປະຊຸມສະພາແຫ່ງຊາດ ຄື:

1) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022;

2) ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022.

## ຄະນະ...

ເມືອງທີ່ຈະລົງສະໝັກຮັບເລືອກຕັ້ງຄັ້ງນີ້ ເຊິ່ງມີ 17 ພັກ ເປັນຕົ້ນ: ພັກປະຊາຊົນກຳປູເຈຍ, ພັກແສງຫຼຽນ, ພັກຟຸຊິນເປັກ (FUNCINPEC), ພັກຊາດກຳປູເຈຍ, ພັກປະຊາທິປະໄຕຮາກຖານ; ຜູ້ຕາງໜ້າ 5 ລັດຖະສະພາຈາກປະເທດອາຊຽນ ເຂົ້າຮ່ວມສັງເກດການ ຄື: ລາວ, ຫວຽດນາມ, ມາເລເຊຍ, ອິນໂດເນເຊຍ ແລະ ຟີລິບປິນ; ບັນດາລັດຖະສະພາຈາກປະເທດໃນເອີຣົບ, ອາເມລິກາ ແລະ ຂົງເຂດອື່ນໆ ເປັນຕົ້ນ: ສະເປນ, ອາແຊັກໄບຊານ, ໂຄລົມເບຍ, ອາລັບເອມີເຣດ, ມັນດິບ ແລະ ຈີນ; ກຸ່ມພັກການເມືອງຂອງຕ່າງປະເທດເຂົ້າຮ່ວມສັງເກດການ; ຄະນະຜູ້ແທນຂອງເວທີ ປຶກສາຫາລືການຮ່ວມມືທາງສັງຄົມ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs), ບັນດາສະມາຄົມຊາວກຳປູເຈຍ ຢູ່ ສ.ເກົາຫລີ, ນິວຊີແລນ, ອິນໂດເນເຊຍ ແລະ ອື່ນໆ ເຂົ້າຮ່ວມ.

ການເລືອກຕັ້ງຂັ້ນຕາແສງຂອງຣາຊາອານາຈັກກຳປູເຈຍ ແມ່ນການເລືອກຕັ້ງເອົາຄະນະຕາແສງ ເພື່ອໄປເລືອກຕັ້ງເອົາສະມາຊິກສະພາສູງໃນຂັ້ນຕໍ່ໄປ, ການເລືອກຕັ້ງຄະນະຕາແສງ ໄດ້ດຳເນີນມາ 5 ຄັ້ງແລ້ວ ເຊິ່ງການເລືອກຕັ້ງຄັ້ງທຳອິດແມ່ນປີ 2002, ແຕ່ລະຄັ້ງມີອາຍຸການ 5 ປີ ໂດຍແມ່ນຄະນະກຳມະການເລືອກຕັ້ງແຫ່ງຊາດກຳປູເຈຍ ເປັນຜູ້ຮັບຜິດຊອບການເລືອກຕັ້ງຕາມກົດໝາຍ ວ່າດ້ວຍການເລືອກຕັ້ງຕາແສງ ສະບັບປີ 2001 ແລະ ຕາມລັດຖະທຳມະນູນຂອງຣາຊະອານາຈັກກຳປູເຈຍ; ສຳລັບຜູ້ສະໝັກຮັບເລືອກຕັ້ງ ແມ່ນແຕ່ລະພັກເປັນຜູ້ສົ່ງລົງສະໝັກໃນແຕ່ລະເຂດເລືອກຕັ້ງ ແລະ ການສະໝັກຮັບເລືອກຕັ້ງແຕ່ລະຄັ້ງ ມີຈຳນວນພັກ, ຕາແສງ, ຈຳນວນຜູ້ລົງທະບຽນເລືອກຕັ້ງ ແລະ ຜູ້ໄປເລືອກຕັ້ງຕົວຈິງ.

ຜ່ານການສັງເກດການການເລືອກຕັ້ງຂັ້ນຕາແສງເຫັນວ່າ: ຄະນະຮັບຜິດຊອບຂອງແຕ່ລະໜ່ວຍເລືອກຕັ້ງ ເຊິ່ງປະກອບມີ 6 ທ່ານ ແມ່ນເປັນກາງ ບໍ່ພັກໄຝ່ພັກການເມືອງໃດ, ມີບັນຊີລາຍຊື່ພັກທີ່ສະໝັກຮັບເລືອກຕັ້ງ ແລະ ຜູ້ລົງທະບຽນປ່ອນບັດເລືອກຕັ້ງທີ່ລະອຽດຈະແຈ້ງ; ພັກທີ່ລົງສະໝັກ ຢູ່ຕາແສງຕ່າງໆຕ່ຳສຸດແມ່ນມີ 2 ພັກ ແລະ ສູງສຸດແມ່ນ 4 ພັກ; ສະພາບການເລືອກຕັ້ງມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍດີ; ປະຊາຊົນຜູ້ມີສິດເລືອກຕັ້ງສາມາດລົງທະບຽນກ່ອນ 1 ເດືອນ ແລະ ເວລາອອກມາໃຊ້ສິດປ່ອນບັດເລືອກຕັ້ງ ຈະຕ້ອງຖືບັດປະຈຳຕົວ ເພື່ອໃຫ້ຄະນະກຳມະການການເລືອກຕັ້ງສາມາດກວດກາຖືກຕ້ອງກັບບັນຊີລາຍຊື່ໃນໃບລົງທະບຽນ ເຊິ່ງແຕ່ລະໜ່ວຍເລືອກຕັ້ງຜູ້ທີ່ໄດ້ລົງທະບຽນປ່ອນບັດເລືອກຕັ້ງ ນອກຈາກມີບັນຊີລາຍຊື່ຢູ່ໃນຄະນະກຳມະການແລ້ວຍັງມີບັນຊີລາຍຊື່ຕິດໄວ້ຢູ່ໃນດ້ານໜ້າຫ້ອງປ່ອນບັດເລືອກຕັ້ງ; ອຸປະກອນຮັບໃຊ້ການເລືອກຕັ້ງ ເປັນຕົ້ນ: ຫີບປ່ອນບັດສະອາດງາມຕາ, ແໜ້ນໜາ, ໄຂໃຫ້ປະຊາຊົນຜູ້ໄປໃຊ້ສິດປ່ອນບັດເລືອກຕັ້ງ ແລະ ຜູ້ສັງເກດການກວດເບິ່ງທາງໃນກ່ອນການປ່ອນບັດ; ມີບ່ອນລົງຄະແນນສຽງ (ຂີດບັດ) 2 ຈຸດ ເຊິ່ງມີຝາມີກຳບັງ 3 ດ້ານ ແລະ ຫ້າມບໍ່ໃຫ້ມີການຖ່າຍຮູບໃນບໍລິເວນນັ້ນ, ພາຍຫລັງຂີດບັດແລ້ວກໍນຳໄປປ່ອນເຂົ້າຫີບປ່ອນບັດ; ຈາກນັ້ນ, ໄດ້ຈ້ຳສີນີ້ວມືດ້ວຍນ້ຳສີ ສະແດງເຖິງການໄດ້ປ່ອນບັດແລ້ວ ເພື່ອປ້ອງກັນການລົງຄະແນນສຽງຊ້ຳຊ້ອນ; ຂະບວນການນັບຄະແນນນອກຈາກຄະນະຮັບຜິດຊອບຂອງແຕ່ລະໜ່ວຍເລືອກຕັ້ງເປັນຜູ້ດຳເນີນແລ້ວ ຍັງມີຜູ້ສັງເກດການຂອງພັກການເມືອງທີ່ມີຜູ້ສະໝັກ ໃນຕາແສງຕ່າງໆ ເຂົ້າຮ່ວມນັບຄະແນນນຳເພື່ອຮັບປະກັນຄວາມໂປ່ງໃສ ແລະ ຍຸຕິທຳ.

ການເລືອກຕັ້ງຂັ້ນຕາແສງຄັ້ງນີ້, ມີປະຊາຊົນກຳປູເຈຍ ອອກມາໃຊ້ສິດເລືອກຕັ້ງ 7,38 ລ້ານຄົນ ຈາກຜູ້ລົງລົງທະບຽນເລືອກຕັ້ງໄວ້ແລ້ວ 9,2 ລ້ານຄົນ ເທົ່າກັບ 78% ຂອງຜູ້ລົງທະບຽນ; ສຳລັບຜົນການເລືອກຕັ້ງຂັ້ນຕາແສງ ແມ່ນພັກປະຊາຊົນກຳປູເຈຍ ໄດ້ 1.648 ຕາແສງ, ພັກແສງຫຼຽນ ໄດ້ 4 ຕາແສງ ສ່ວນພັກອື່ນໆແມ່ນບໍ່ໄດ້ຮັບເລືອກ; ເຊິ່ງໃນຂອບເຂດທົ່ວປະເທດກຳປູເຈຍ ມີຈຳນວນຕາແສງທັງໝົດ 1.652 ຕາແສງ.

(ກຳມາທິການຕ່າງປະເທດ)

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

## ພາກທີ VII
## ກອງທະບຽນຍານພາຫະນະທາງບົກ

**ມາດຕາ 53 ກອງທະບຽນຍານພາຫະນະທາງບົກ**

ກອງທະບຽນຍານພາຫະນະທາງບົກ ມີ ສາມຂັ້ນ ດັ່ງນີ້:

1. ກອງທະບຽນກາງຍານພາຫະນະທາງບົກ;
2. ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ;
3. ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 54 ກອງທະບຽນກາງຍານພາຫະນະທາງບົກ**

ກອງທະບຽນກາງຍານພາຫະນະທາງບົກ ແມ່ນ ຫົວໜ່ວຍວິຊາການລະດັບສອງ ເປັນກົງຈັກໜຶ່ງຂອງກະຊວງໂຍທາທິການ ແລະ ຂົນສົ່ງ ມີພາລະບົດບາດເປັນເສນາທິການໃນການຄຸ້ມຄອງວຽກງານຍານພາຫະນະທາງບົກ ໃນຂອບເຂດທົ່ວປະເທດ ພ້ອມທັງຮັບປະກັນຄວາມສະດວກ, ວ່ອງໄວ, ໂປ່ງໃສ, ເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກ.

**ມາດຕາ 55 ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ**

ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ແມ່ນຫົວໜ່ວຍວິຊາການ ທີ່ຂຶ້ນກັບພະແນກໂຍທາທິການ ແລະ ຂົນສົ່ງ, ສ່ວນດ້ານວິຊາການຂຶ້ນກັບກອງທະບຽນກາງຍານພາຫະນະທາງບົກ ມີພາລະບົດບາດໃນການຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງຮັບປະກັນການບໍລິການໃຫ້ມີຄວາມ ສະດວກ, ວ່ອງໄວ, ໂປ່ງໃສ, ເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກ.

**ມາດຕາ 56 ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ**

ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ ແມ່ນຫົວໜ່ວຍວິຊາການທີ່ຂຶ້ນກັບຫ້ອງການໂຍທາທິການ ແລະ ຂົນສົ່ງ, ສ່ວນດ້ານວິຊາການຂຶ້ນກັບກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ມີພາລະບົດບາດໃນການຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກຍານພາຫະນະທາງບົກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງຮັບປະກັນການບໍລິການໃຫ້ມີຄວາມ ສະດວກ, ວ່ອງໄວ, ໂປ່ງໃສ, ເປັນລະບຽບຮຽບຮ້ອຍ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງກອງທະບຽນກາງຍານພາຫະນະທາງບົກ**

ກອງທະບຽນກາງຍານພາຫະນະທາງບົກ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ວາງແຜນ, ຄຸ້ມຄອງ ແລະ ຕິດຕາມກວດກາ ກ່ຽວກັບວຽກງານຍານພາຫະນະທາງບົກ ໃນຂອບເຂດທົ່ວປະເທດ;
2. ນຳໃຊ້ ເຕັກນິກວິຊາການ ແລະ ເຕັກໂນໂລຊີໃໝ່ ທີ່ເໝາະສົມເຂົ້າໃນການຄຸ້ມຄອງ ແລະ ການບໍລິການ ການຂຶ້ນທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ;
3. ຄົ້ນຄວ້າສ້າງ ແລະ ປັບປຸງ ນິຕິກຳ, ປື້ມຄູ່ມື ໃນການຄຸ້ມຄອງ ແລະ ບໍລິການການຂຶ້ນທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;
4. ຊີ້ນຳ, ສັງລວມ ແລະ ຕິດຕາມ ກວດກາ ການຂຶ້ນທະບຽນ, ການກວດກາເຕັກນິກ ຍານພາຫະ ນະທາງບົກ;
5. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ ແລະ ສະໜອງຂໍ້ມູນກ່ຽວກັບຍານພາຫະນະທາງບົກ ໃຫ້ອົງການຈັດຕັ້ງລັດ, ເອກະຊົນທີ່ກ່ຽວຂ້ອງ ຫຼື ຕາມການສະເໜີ;
6. ເກັບ ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານຍານພາຫະນະທາງບົກ;
7. ສະໜອງ ວັດຖຸປະກອນ ກ່ຽວກັບການຂຶ້ນທະບຽນ, ການພິມໃບທະບຽນ ຍານພາຫະນະທາງບົກ ໃຫ້ກອງທະບຽນຍານພາຫະນະທາງບົກ ຂັ້ນແຂວງ ແລະ ຂັ້ນເມືອງ;
8. ອອກຄຳສັ່ງ ຢຸດການຂຶ້ນທະບຽນ, ລຶບລ້າງການຂຶ້ນທະບຽນທີ່ບໍ່ຖືກຕ້ອງຂອງກອງທະບຽນຍານພາຫະນະ ແຂວງ, ນະຄອນຫຼວງ ແລະ ນຳໃຊ້ມາດຕະການເພື່ອແກ້ໄຂບັນຫາດັ່ງກ່າວ;
9. ຮັບຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການຂຶ້ນທະບຽນຍານພາຫະນະທາງບົກໃຫ້ສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ;
10. ສະໜອງສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກ ທີ່ເໝາະສົມໃຫ້ໜ່ວຍງານຕິດປ້າຍທະບຽນຍານພາຫະນະທາງບົກ ຂອງຂະແໜງການປ້ອງກັນຄວາມສະຫງົບ;
11. ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງ ໃນການເຄື່ອນໄຫວຄຸ້ມຄອງວຽກງານຍານພາຫະ ນະທາງບົກ;
12. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຍານພາຫະນະທາງບົກ ຕາມການມອບໝາຍຂອງຂັ້ນເທິງ;
13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຍານພາຫະນະທາງບົກ ຕໍ່ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 ສິດ ແລະ ໜ້າທີ່ ຂອງກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ**

ກອງທະບຽນຍານພາຫະນະທາງບົກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ;
2. ຊີ້ນຳ, ສັງລວມ ແລະ ຕິດຕາມ ກວດກາ ການຂຶ້ນທະບຽນ, ການກວດກາເຕັກນິກ ຍານພາຫະ ນະທາງບົກຂອງກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ;
3. ນຳໃຊ້ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ ແລະ ສະໜອງຂໍ້ມູນກ່ຽວກັບຍານພາ ຫະນະທາງບົກ ໃຫ້ອົງການຈັດຕັ້ງລັດ, ເອກະຊົນທີ່ກ່ຽວຂ້ອງ ຫຼື ຕາມການສະເໜີ;
4. ອອກຄຳສັ່ງ ຢຸດການຂຶ້ນທະບຽນ, ລຶບລ້າງການຂຶ້ນທະບຽນ ທີ່ບໍ່ຖືກຕ້ອງຂອງຕົນ ຫຼື ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ ແລະ ນຳໃຊ້ມາດຕະການເພື່ອແກ້ໄຂບັນຫາດັ່ງ ກ່າວ;
5. ຮັບຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຂຶ້ນທະບຽນຍານພາຫະນະທາງບົກ ໃຫ້ສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ;
6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການຂຶ້ນທະບຽນ, ພິມໃບທະບຽນຍານພາຫະນະທາງບົກ;
7. ປະສານສົມທົບກັບພະແນກການແລະພາກສ່ວນທີ່ກ່ຽວຂ້ອງໃນການຂຶ້ນທະບຽນຍານພາຫະ ນະທາງບົກ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຍານພາຫະນະທາງບົກ ຕໍ່ກອງທະບຽນກາງຍານພາຫະນະທາງບົກ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ**

ກອງທະບຽນຍານພາຫະນະທາງບົກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຂຶ້ນທະບຽນ, ພິມໃບທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ປະເພດລົດຈັກ ແລະ ກົນຈັກກະສິກຳ;
2. ນຳໃຊ້ຖານຂໍ້ມູນການຂຶ້ນທະບຽນຍານພາຫະນະທາງບົກ ແລະ ສະໜອງຂໍ້ມູນກ່ຽວກັບຍານພາ ຫະນະທາງບົກ ໃຫ້ອົງການຈັດຕັ້ງລັດ, ເອກະຊົນທີ່ກ່ຽວຂ້ອງ ຫຼື ຕາມການສະເໜີ;
3. ລຶບລ້າງການຂຶ້ນທະບຽນ ທີ່ບໍ່ຖືກຕ້ອງຂອງຕົນ ພ້ອມທັງນຳໃຊ້ມາດຕະການເພື່ອແກ້ໄຂບັນຫາດັ່ງກ່າວ;
4. ພົວພັນ, ຮ່ວມມືກັບໜ່ວຍງານຕິດປ້າຍຂອງຂະແໜງການປ້ອງກັນຄວາມສະຫງົບ ໃນການຜະລິດ ແລະ ຕິດປ້າຍທະບຽນຍານພາຫະນະທາງບົກ;
5. ຮັບຄຳສະເໜີ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການຂຶ້ນທະບຽນຍານພາຫະນະທາງບົກ ໃຫ້ສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ;
6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບການຂຶ້ນທະບຽນ, ພິມ

ອ່ານຕໍ່ສະບັບໜ້າ...

ຖະແຫລງ...

2023 ການປະກອບຄຳເຫັນຂອງບັນດາສະມາຊິກສະພາແຫ່ງຊາດ ລວມທັງໝົດມີ 13 ທ່ານ, ຍິງ 1 ທ່ານ ແລະ ສາມາດສັງລວມບັນດາເນື້ອໃນທີ່ພົ້ນເດັ່ນ ໄດ້ດັ່ງນີ້:

ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ, ບັນດາສະມາຊິກສະພາແຫ່ງຊາດ ໄດ້ປະກອບຄຳເຫັນຊົມເຊີຍລັດຖະບານ ທີ່ມີຄວາມພະຍາຍາມໃນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນເງື່ອນໄຂທີ່ປະເທດພວກເຮົາພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ແຕ່ກໍສາມາດຈັດຕັ້ງປະຕິບັດຕາມແຜນການໄດ້ຢ່າງມີຄວາມຄືບໜ້າ, ເຊິ່ງຜ່ານການປະຕິບັດຕົວຈິງ ແຕ່ເດືອນກໍລະກົດ 2021 ຫາເດືອນພຶດສະພາ 2022 ສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໃນຂອບເຂດທົ່ວປະເທດໄດ້ເຖິງ 4.094 ເລື່ອງ, ຈັບຜູ້ຖືກຫາໄດ້ 5.818 ຄົນ ຍິງ 618 ຄົນ, ຍຶດຢາເສບຕິດປະເພດຢາບ້າໄດ້ 177.752.115 ເມັດ, ນ້ຳໜັກລວມ 17.887,29 ກລ, ພ້ອມນີ້ ກຸ່ມເສບ, ຂົນສົ່ງ-ຄ້າຂາຍ ຢາເສບຕິດມີຄວາມຢ້ານກົວ,ຈຳນວນໜຶ່ງໄດ້ຢຸດເຊົາ. ແຕ່ຄຽງຄູ່ກັບຜົນໄດ້ຮັບດັ່ງກ່າວນັ້ນ, ຜ່ານຈາກການຈັດຕັ້ງປະຕິບັດ ເຫັນວ່າຍັງພົບຄວາມຫຍຸ້ງຍາກ ແລະ ຍັງມີບັນຫາດ້ານອ່ອນ-ຄົງຄ້າງ, ເປັນຕົ້ນແມ່ນ: ການໂຄສະນາ, ສຶກສາອົບຮົມ, ເຜີຍແຜ່ແນະນຳບັນດາລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດໃຫ້ທົ່ວສັງຄົມຍັງບໍ່ທັນທົ່ວເຖິງທຸກເປົ້າໝາຍ, ປະຊາຊົນຈຳນວນໜຶ່ງ ຍັງບໍ່ທັນໃຫ້ການຮ່ວມມືໃນການແຈ້ງເບາະແສ ແລະ ໃຫ້ຂໍ້ມູນກ່ຽວກັບບັນຫາຢາເສບຕິດໃນທ້ອງຖິ່ນຕົນ; ການບຳບັດ, ປິ່ນປົວ, ຟື້ນຟູສຸຂະພາບ ແລະ ເຝິກສີມື, ເຝິກອາຊີບໃຫ້ຜູ້ຕິດຢາເສບຕິດ ຍັງເຮັດບໍ່ທັນໄດ້ດີ, ເປັນສາເຫດໜຶ່ງທີ່ໃຫ້ຜູ້ຕິດຢາເສບຕິດ ໃນເມື່ອປິ່ນປົວເຊົາແລ້ວ ຍັງກັບໄປເສບຢາເສບຕິດຄືນໃໝ່; ຄະນະພັກ, ອົງການປົກຄອງ ກໍຄືຂະແໜງການຕ່າງໆ ແລະ ພະນັກງານ-ສະມາຊິກພັກຈຳນວນໜຶ່ງ ຍັງເຂົ້າໃຈວ່າ, ວຽກງານແກ້ໄຂບັນຫາຢາເສບຕິດ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຂະແໜງການປ້ອງກັນຄວາມສະຫງົບ ຈຶ່ງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນ; ຍັງຂາດງົບປະມານ, ວັດຖຸອຸປະກອນ, ພາຫະນະທີ່ຈຳເປັນໃນການຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ.

ສ່ວນທິດທາງແຜນການຈຸດສຸມໃນໄລຍະຕໍ່ໄປ, ສະມາຊິກສະພາແຫ່ງຊາດ ໄດ້ສະເໜີ ດັ່ງນີ້:

1. ຕ້ອງໄດ້ເພີ່ມທະວີການຍົກສູງຄວາມສາມາດ ໃນການນຳພາຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ກາຍເປັນຄວາມຮັບຜິດຊອບໂດຍກົງ, ເດັດຂາດຂອງຄະນະພັກ-ຄະນະນຳແຕ່ລະຂັ້ນ, ຖືເອົາການແກ້ໄຂບັນຫາຢາເສບຕິດ ເປັນມາດຕະຖານເງື່ອນໄຂໜຶ່ງ ເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ສ້າງບ້ານປອດຢາເສບຕິດ, ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອສ້າງໃຫ້ທຸກຄົນມີສະຕິລະວັງຕົວ ແລະ ເຂົ້າຮ່ວມໃນການຕ້ານ, ສະກັດກັ້ນ ບັນຫາຢາເສບຕິດ ຢ່າງແຂງແຮງ;
2. ສືບຕໍ່ສ້າງຄວາມຮັບຮູ້ໃຫ້ສັງຄົມຫລາຍຂຶ້ນ ແລະ ຕໍ່ເນື່ອງ ດ້ວຍການໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດໃຫ້ເລິກເຊິ່ງ, ເຖິງຖອງ ແລະ ທົ່ວເຖິງທຸກເປົ້າໝາຍໃນສັງຄົມ, ສິ່ງສຳຄັນແມ່ນເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ສະຖາບັນຄອບຄົວ ແລະ ຊຸມຊົນໃນການຕ້ານ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ແຂງແຮງ, ມີປະສິດທິຜົນ ແລະ ໄດ້ຮັບຜົນດີ;
3. ສືບຕໍ່ປັບປຸງ, ສ້າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບບັນຫາຢາເສບຕິດໃຫ້ຮັດກຸມ, ບໍ່ໃຫ້ມີຊ່ອງຫວ່າງ, ກົດໜ່ວງທ່ວງດຶງ, ຖືກຕ້ອງ ແລະ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ໃນການເລັ່ງທວງໃຫ້ແກ່ການແກ້ໄຂບັນຫາຢາເສບຕິດ;
4. ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ກໍຄືໜ່ວຍງານ ແລະ ບຸກຄະລາກອນ ທີ່ຮັບຜິດຊອບໂດຍກົງ ຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ເດັດຂາດ, ໂປ່ງໃສ, ເປັນມືອາຊີບ ແລະ ມີຄວາມສາມາດພຽງພໍ ໃນການເຄື່ອນໄຫວແກ້ໄຂບັນຫາຢາເສບຕິດ. ພ້ອມນີ້, ກໍຕ້ອງເອົາໃຈໃສ່ເພີ່ມຄວາມສາມາດທາງດ້ານພື້ນຖານໂຄງລ່າງ, ເຕັກນິກ-ວິຊາການ, ເຄື່ອງມືທີ່ທັນສະໄໝ, ງົບປະມານຮັບໃຊ້ ຢ່າງເໝາະສົມ ແລະ ເປັນລະບົບຄົບຊຸດ ເພື່ອຮັບໃຊ້ວຽກງານສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ມີປະສິດຕິພາບ ແລະ ປະສິດທິຜົນ;
5. ສະເໜີໃຫ້ເອົາໃຈໃສ່ ຕໍ່ການບຳບັດ-ປິ່ນປົວຜູ້ຕິດຢາເສບຕິດ, ເຊິ່ງໃນປັດຈຸບັນ ກໍຄືໃນຊຸມປີຕໍ່ໜ້າ ເຫັນວ່າຍັງມີຄວາມຈຳເປັນ ຕ້ອງໄດ້ປັບປຸງບັນດາສູນ ກໍຄືສະຖານບຳບັດ-ປິ່ນປົວ ແລະ ເຝິກວິຊາຊີບ ເພື່ອຮັບໃຊ້ໃຫ້ແກ່ວຽກງານດັ່ງກ່າວ, ຄົ້ນຄວ້າປະກອບພາຫະນະ, ອຸປະກອນຮັບໃຊ້ທີ່ຈຳເປັນ ແລະ ບຸກຄະລະກອນແພດໝໍ ກໍຄືວິຊາການດ້ານຕ່າງໆ ໃຫ້ມີຄວາມຮັບປະກັນຢ່າງເໝາະສົມ. ສ່ວນຄາດໝາຍຕໍ່ໄປ ແມ່ນຕ້ອງໄດ້ພະຍາຍາມເຮັດໃຫ້ຜູ້ຕິດຢາເສບຕິດຫລຸດລົງເປັນກ້າວໆ ເຊິ່ງນັ້ນແມ່ນຕົວຊີ້ວັດໜຶ່ງທີ່ຊີ້ໃຫ້ເຫັນປະສິດທິຜົນ ໃນການແກ້ໄຂບັນຫາຢາເສບຕິດ ຢູ່ປະເທດເຮົາ;
6. ສະເໜີໃຫ້ສືບຕໍ່ການຮ່ວມມືກັບສາກົນ, ໂດຍສະເພາະແມ່ນກັບບັນດາປະເທດໃກ້ຄຽງໃນອະນຸພາກພື້ນ, ພາກພື້ນໃຫ້ແໜ້ນແຟ້ນ, ເປັນລະບົບ, ຮັດກຸມ ເພື່ອສະກັດກັ້ນ, ປາບປາມຂະບວນການຢາເສບຕິດໃຫ້ແຂງແຮງ, ມີຈຸດສຸມ ແລະ ມີປະສິດທິຜົນ. ພ້ອມນີ້, ຍາດແຍ່ງເອົາການສະໜັບສະໜູນ, ຊ່ວຍເຫລືອທາງດ້ານອຸປະກອນ-ເຕັກນິກ, ວິຊາການ ແລະ ທຶນຮອນ ຈາກປະເທດເພື່ອນມິດໃຫ້ຫລາຍຂຶ້ນ.

ໃນຕອນທ້າຍນີ້, ຂ້າພະເຈົ້າ ໃນນາມຄະນະນຳສະພາແຫ່ງຊາດ ຂໍຮຽກຮ້ອງມາຍັງຄະນະພັກ-ຄະນະນຳທຸກຂັ້ນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ຕະຫລອດພໍ່ແມ່ປະຊາຊົນບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ ຈົ່ງໃຫ້ການຮ່ວມມື ແລະ ເຂົ້າຮ່ວມຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຂອງລັດຖະບານ ເຮັດໃຫ້ສັງຄົມລາວພວກເຮົາປອດໄພຈາກບັນຫາຢາເສບຕິດ ແລະ ກ້າວໄປສູ່ການກຳຈັດປັດເປົ່າໃຫ້ໝົດສິ້ນໄປເປັນກ້າວໆ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ